ບົດບັນທຶກ

ກອງປະຊຸມຄະນະກຳມາທິການຮ່ວມ ວ່າດ້ວຍການຮ່ວມມື ລາວ - ໄທ ຄັ້ງທີ 19

ໃນວັນທີ 22 - 24 ມັງກອນ 2015 ທີ່ ນະຄອນຫຼວງວຽງຈັນ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

1. ກອງປະຊຸມຄະນະກຳມາທິການຮ່ວມ ວ່າດ້ວຍການຮ່ວມມື ລາວ-ໄທ ຄັ້ງທີ 19 ໄດ້ຈັດຂຶ້ນ ລະຫວ່າງວັນທີ 22-24 ມັງກອນ 2015 ທີ່ນະຄອນຫຼວງວຽງຈັນ, ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ, ຕາມຄຳເຊີນຂອງ ພະນະທ່ານ ທອງລຸນ ສີສຸລິດ, ຮອງນາຍົກລັດຖະມົນຕີ, ລັດຖະມົນຕີວ່າການ ກະຊວງການຕ່າງປະເທດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ.

2. ພະນະທ່ານ ທອງລຸນ ສີສຸລິດ, ຮອງນາຍົກລັດຖະມົນຕີ, ລັດຖະມົນຕີວ່າການ ກະຊວງການຕ່າງປະເທດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ, ເປັນຫົວໜ້າຄະນະຜູ້ແທນ ແລະ ປະທານຮ່ວມຝ່າຍລາວ, ພະນະທ່ານ ພົນເອກ ທະນະສັກ ປະຕິມາປຣະກອນ, ຮອງນາຍົກລັດຖະມົນຕີ, ລັດຖະມົນຕີວ່າການ ກະຊວງການຕ່າງປະເທດ ແຫ່ງ ຣາຊະອານາຈັກໄທ, ເປັນຫົວໜ້າຄະນະຜູ້ແທນ ແລະ ປະທານຮ່ວມຝ່າຍໄທ; ລາຍຊື່ຄະນະຜູ້ແທນຂອງທັງສອງຝ່າຍ ຕາມເອກະສານຄັດຕິດໝາຍເລກ 1 ແລະ 2 ຕາມລຳດັບ; ບົດປາໄສກ່າວເປີດ ແລະ ປິດກອງປະຊຸມຂອງປະທານຮ່ວມທັງສອງຝ່າຍ ຕາມເອກະສານຄັດຕິດໝາຍເລກ 3 ແລະ 4 ຕາມລຳດັບ.

3. ກອງປະຊຸມ ໄດ້ປຶກສາຫາລືແລກປ່ຽນຄວາມຄິດເຫັນ ແລະ ທົບທວນຜົນການປະຕິບັດບົດບັນທຶກກອງປະຊຸມ ຄັ້ງທີ 18, ກ່ຽວກັບການຮ່ວມມືດ້ານຕ່າງໆ ທີ່ທັງສອງຝ່າຍໄດ້ປະຕິບັດຮ່ວມກັນ ໃນໄລຍະໜຶ່ງປີປາຍຜ່ານມາ ໃນດ້ານການເມືອງ ແລະ ຄວາມໝັ້ນຄົງ, ດ້ານເສດຖະກິດ, ການຮ່ວມມືເພື່ອການພັດທະນາ ແລະ ດ້ານອື່ນໆ.

4. ກອງປະຊຸມສະແດງຄວາມຍິນດີ ຕໍ່ການແລກປ່ຽນການຢ້ຽມຢາມ ຂອງຄະນະຜູ້ແທນລະດັບສູງ ລະຫວ່າງສອງປະເທດ ເຊັ່ນ: ການເດີນທາງມາຢ້ຽມຢາມ ສປປ ລາວ ຂອງສົມເດັດພະເທບ ພະຣັດຣາຊະສຸດາສະຫຍາມບໍຣົມ ຣາຊະກຸມາຣີ ໃນລະຫວ່າງວັນທີ 29-30 ເມສາ 2014, ການຢ້ຽມຢາມ ສປປ ລາວຢ່າງເປັນທາງການຂອງ ພະນະທ່ານ ພົນເອກ ປຣະຢຸດ ຈັນໂອຊາ, ນາຍົກລັດຖະມົນຕີ ແຫ່ງ ຣາຊະອານາຈັກໄທ ໃນລະຫວ່າງວັນທີ 26-27 ພະຈິກ 2014 ແລະ ການເຂົ້າຮ່ວມກອງປະຊຸມສຸດຍອດບັນດາປະເທດລຸ່ມແມ່ນ້ຳຂອງ (GMS) ຄັ້ງທີ 5 ໃນລະຫວ່າງວັນທີ 19-20 ທັນວາ 2014 ທີ່ ບາງກອກ ຂອງພະນະທ່ານ ທອງສິງ ທຳມະວົງ, ນາຍົກລັດຖະມົນຕີ ແຫ່ງ ສປປ ລາວ.

5. ກອງປະຊຸມຢືນຢັນ ເຈດຕະນາລົມຂອງລັດຖະບານທັງສອງປະເທດ ທີ່ຈະເພີ່ມທະວີການຮ່ວມມືໃນຂອບທະວິພາຄີ ແລະ ພະຫຸພາຄີ ລວມທັງການແລກປ່ຽນການຢ້ຽມຢາມ ແລະ ການໄປມາຫາສູ່ກັນຂອງເຈົ້າໜ້າທີ່ລະດັບສູງ ແລະ ລະດັບອື່ນໆ ລະຫວ່າງສອງປະເທດ ໃຫ້ມີຄວາມສະໜິດສະໜົມກັນຫຼາຍຂຶ້ນ ເພື່ອເອື້ອອຳນວຍຜົນປະໂຫຍດໃນທຸກດ້ານ ແລະ ນຳເອົາຄວາມສົມບູນພູນສຸກມາສູ່ປະຊາຊົນຂອງທັງສອງປະເທດ ໂດຍສົ່ງເສີມການເຊື່ອມໂຍງໃນທຸກດ້ານ ໂດຍສະເພາະການຮ່ວມມືພາກເອກະຊົນ ແລະ ການຮ່ວມ

ມືດ້ານເສດຖະກິດ ເພື່ອສະໜັບສະໜູນໃຫ້ທັງສອງປະເທດຮ່ວມມືກັນຢ່າງໃກ້ຊິດຫຼາຍຂຶ້ນຕື່ມໃນຖານະຄອບຄົວອາຊຽນດ້ວຍກັນ.

6. ກອງປະຊຸມໄດ້ປຶກສາຫາລືປະເດັນຕ່າງໆ ແລະ ກຳນົດແຜນການຮ່ວມມືໃນຊຸມປີຕໍ່ໜ້າ ຕາມລະບຽບວາລະຂອງກອງປະຊຸມ ຕາມເອກະສານຄັດຕິດໝາຍເລກ 5, ເຊິ່ງສະຫຼຸບໄດ້ດັ່ງນີ້:

<u>ການຮ່ວມມືດ້ານການເມືອງ ແລະ ຄວາມໝັ້ນຄົງ</u>

<u>ການຮ່ວມມືດ້ານການຮັກສາຄວາມສະຫງົບຮຽບຮ້ອຍຕາມບໍລິເວນຊາຍແດນ</u>

7. ກອງປະຊຸມສະແດງຄວາມຍິນດີ ທີ່ຝ່າຍໄທເປັນເຈົ້າພາບຈັດກອງປະຊຸມຄະນະກຳມະການຮ່ວມມືຮັກສາຄວາມສະຫງົບຮຽບຮ້ອຍຕາມຊາຍແດນທົ່ວໄປ ລາວ-ໄທ ຄັ້ງທີ 21 ລະຫວ່າງວັນທີ 25-28 ພະຈິກ 2014 ທີ່ບາງກອກ ແລະ ສືບຕໍ່ສະໜັບສະໜູນໃຫ້ ຄະນະກຳມະການຮ່ວມມືຮັກສາຄວາມສະຫງົບຮຽບຮ້ອຍຕາມຊາຍແດນ ລະດັບແຂວງ-ຈັງຫວັດ ທີ່ມີຊາຍແດນຕິດກັນ ໄດ້ພົບປະປຶກສາຫາລືຢ່າງໜ້ອຍໜຶ່ງຄັ້ງຕໍ່ປີ ໂດຍຜັດປ່ຽນກັນເປັນເຈົ້າພາບ ເພື່ອສົ່ງເສີມການຮ່ວມມື ແລະ ເສີມສ້າງຄວາມເຂົ້າໃຈອັນດີລະຫວ່າງແຂວງ ແລະ ຈັງຫວັດ.

8. ກອງປະຊຸມສະໜັບສະໜູນ ໃຫ້ພາກສ່ວນທີ່ກ່ຽວຂ້ອງທັງສອງຝ່າຍເລັ່ງລັດປຶກສາຫາລື ກ່ຽວກັບການປັບປຸງຂໍ້ຕົກລົງ ວ່າດ້ວຍການຮ່ວມມືດ້ານຄວາມໝັ້ນຄົງຕາມບໍລິເວນຊາຍແດນ ລາວ-ໄທ ສະບັບລົງວັນທີ 16 ຕຸລາ 2003, ເຊິ່ງໄດ້ສິ້ນສຸດຜົນບັງຄັບໃຊ້ໃນເດືອນ ຕຸລາ 2013 ເພື່ອໃຫ້ມີການລົງນາມຮ່ວມກັນໂດຍໄວ.

9. ກອງປະຊຸມສະແດງຄວາມຍິນດີ ທີ່ພາກສ່ວນກ່ຽວຂ້ອງຂອງສອງປະເທດ ໄດ້ມີການຮ່ວມມື ແລະ ແລກປ່ຽນການຢ້ຽມຢາມກັນຢ່າງສະໝ່ຳສະເໝີ ລະຫວ່າງລັດຖະມົນຕີວ່າການ ກະຊວງປ້ອງກັນປະເທດ, ຫົວໜ້າ ແລະ ຮອງຫົວໜ້າກົມໃຫຍ່ເສນາທິການກອງທັບປະຊາຊົນລາວ, ຫົວໜ້າກົມສູ້ຮົບ ແລະ ຫົວໜ້າກົມໃຫຍ່ຕຳຫຼວດ ກະຊວງປ້ອງກັນຄວາມສະຫງົບ ແຫ່ງ ສປປ ລາວ ກັບ ລັດຖະມົນຕີວ່າການກະຊວງກະລາໂຫມ, ຜູ້ບັນຊາການທະຫານສູງສຸດ, ຜູ້ບັນຊາການເຫຼົ່າທັບ, ຜູ້ບັນຊາການຕຳຫຼວດແຫ່ງຊາດ, ແມ່ທັບພາກທີ 2 ແລະ ແມ່ທັບພາກທີ 3 ແຫ່ງ ຣາຊະອານາຈັກໄທ ແລະ ສົ່ງເສີມໃຫ້ມີການແລກປ່ຽນກິດຈະກຳທາງດ້ານ ວັດທະນະທຳ ແລະ ກິລາ ລະຫວ່າງກອງທັບປະຊາຊົນລາວ ແລະ ກອງທັບໄທ ໂດຍໃຫ້ໜ່ວຍງານທີ່ກ່ຽວຂ້ອງຂອງທັງສອງຝ່າຍດຳເນີນການຕາມຜົນຂອງກອງປະຊຸມຕ່າງໆທີ່ໄດ້ຕົກລົງກັນ ເຊັ່ນ: ບົດບັນທຶກ ກອງປະຊຸມຄະນະກຳມະການຮ່ວມມືຮັກສາຄວາມສະຫງົບຮຽບຮ້ອຍຕາມຊາຍແດນທົ່ວໄປ ລາວ-ໄທ ຄັ້ງທີ 21 ແລະ ບົດບັນທຶກກອງປະຊຸມຄະນະກຳມະການຮ່ວມມືຮັກສາຄວາມສະຫງົບຮຽບຮ້ອຍຕາມຊາຍແດນລະດັບແຂວງ - ຈັງຫວັດ ໃຫ້ໄດ້ຮັບຜົນສຳເລັດ.

10. ກອງປະຊຸມສະໜັບສະໜູນ ໃຫ້ໜ່ວຍງານທີ່ກ່ຽວຂ້ອງທັງສອງຝ່າຍ ຮ່ວມກັນຈັດຕັ້ງປະຕິບັດບົດບັນທຶກກອງປະຊຸມຄະນະກຳມະການຮ່ວມ ລາວ-ໄທ ວ່າດ້ວຍການຮ່ວມມືທາງດ້ານວຽກງານຕຳຫຼວດ ຄັ້ງທີ 3 ໃນວັນທີ 30 ກໍລະກົດ - 2 ສິງຫາ 2013 ທີ່ ບາງກອກ, ຣາຊະອານາຈັກໄທ ແລະ ສະໜັບສະໜູນໃຫ້ຈັດກອງປະຊຸມ ຄັ້ງທີ 4 ໃນໂອກາດທີ່ເໝາະສົມ.

11. ກອງປະຊຸມຮັບຊາບ ການປະຕິບັດຕາມຂໍ້ 12 ຂອງບົດບັນທຶກກອງປະຊຸມຄະນະກຳມະການຮ່ວມມື ຮັກສາຄວາມສະຫງົບຮຽບຮ້ອຍຕາມຊາຍແດນທົ່ວໄປ ລາວ-ໄທ ຄັ້ງທີ 21, ກ່ຽວກັບການຮ່ວມມືໃນການແກ້ໄຂບັນຫາຜູ້ລັກລອບເຂົ້າເມືອງ.

12. ກອງປະຊຸມເຫັນດີ ໃຫ້ທັງສອງຝ່າຍສົ່ງເສີມການຮ່ວມມື ແລະ ຄວາມໄວ້ເນື້ອເຊື່ອໃຈເຊິ່ງກັນແລະກັນ ລະຫວ່າງປະຊາຊົນສອງປະເທດ ທີ່ອາໄສຢູ່ບໍລິເວນຊາຍແດນ ໂດຍມີຈຸດປະສົງຮ່ວມກັນເພື່ອສັນຕິພາບ ແລະ ຄວາມຜາສຸກຂອງປະຊາຊົນສອງຊາດ ແລະ ສະໜັບສະໜູນການຮ່ວມມືໃນການພັດທະນາຢ່າງຍືນຍົງ, ຕະຫຼອດຈົນການສົ່ງເສີມການຮ່ວມມືລະຫວ່າງປະເທດ ແລະ ການຮ່ວມມືດ້ານຊາຍແດນລະຫວ່າງກັນ ເພື່ອຄວາມໝັ້ນຄົງ ແລະ ຈະເລີນກ້າວໜ້າຂອງທັງສອງຝ່າຍ.

13. ກອງປະຊຸມເຫັນດີ ໃຫ້ປະຕິບັດຕາມຂໍ້ 7.11 ຂອງບົດບັນທຶກກອງປະຊຸມຄະນະກຳມະການຮ່ວມມື ຮັກສາຄວາມສະຫງົບຮຽບຮ້ອຍຕາມຊາຍແດນທົ່ວໄປ ລາວ-ໄທ ຄັ້ງທີ 21, ລວມທັງມາດຕາ 1 ຂໍ້ 8 ຂອງຂໍ້ຕົກລົງວ່າດ້ວຍການຮ່ວມມືດ້ານຄວາມໝັ້ນຄົງຕາມບໍລິເວນຊາຍແດນທົ່ວໄປ ລາວ-ໄທ ແລະ ຂໍ້ 7.12 ຂອງບົດບັນທຶກ ກອງປະຊຸມຄະນະກຳມະການຮ່ວມມືຮັກສາຄວາມສະຫງົບ ຮຽບຮ້ອຍຕາມຊາຍແດນທົ່ວໄປ ລາວ-ໄທ ຄັ້ງທີ 21.

<u>ການສຳຫຼວດ ແລະ ປັກຫຼັກໝາຍຊາຍແດນຮ່ວມ ລາວ - ໄທ</u>

14. ກອງປະຊຸມສະແດງຄວາມຍິນດີຕໍ່ ຜົນຂອງກອງປະຊຸມຄະນະກຳມາທິການຊາຍແດນຮ່ວມ ລາວ-ໄທ ຄັ້ງທີ 9 ທີ່ຝ່າຍໄທເປັນເຈົ້າພາບ ໃນລະຫວ່າງວັນທີ 13-15 ສິງຫາ 2013 ທີ່ ບາງກອກ ແລະ ຄັ້ງທີ 10 ທີ່ຝ່າຍລາວເປັນເຈົ້າພາບ ໃນລະຫວ່າງວັນທີ 21-23 ມັງກອນ 2015 ທີ່ ນະຄອນຫຼວງວຽງຈັນ, ເຊິ່ງໄດ້ສຳເລັດການກໍ່ສ້າງຫຼັກໝາຍຊາຍແດນທາງບົກເພີ່ມເຕີມຈຳນວນ 6 ຫຼັກໝາຍ ຂອງຫຼັກໝາຍຊາຍແດນທາງບົກ ທັງໝົດ ຈຳນວນ 210 ຫຼັກໝາຍ ແລະ ສອງຝ່າຍເຫັນດີໃຫ້ສືບຕໍ່ການສຳຫຼວດ ແລະ ປັກຫຼັກໝາຍຊາຍແດນ ລາວ-ໄທ ທາງບົກໃຫ້ສຳເລັດໃນປີ 2016.

15. ກອງປະຊຸມສະແດງຄວາມຍິນດີ ແລະ ເລັ່ງລັດໃຫ້ທັງສອງຝ່າຍສ້າງແຜນທີ່ແມ່ນ້ຳຂອງສະບັບໃໝ່ຮ່ວມ ລາວ-ໄທ ໃຫ້ສຳເລັດໂດຍໄວ ເພື່ອນຳໄປສູ່ການສຳຫຼວດ ແລະ ປັກຫຼັກໝາຍຊາຍແດນທາງນ້ຳ ໃຫ້ສຳເລັດໃນປີ 2018.

<u>ການຮ່ວມມືດ້ານການກວດກາ ແລະ ຄວບຄຸມຢາເສບຕິດ</u>

16. ກອງປະຊຸມສະໜັບສະໜູນ ໃຫ້ໜ່ວຍງານທີ່ກ່ຽວຂ້ອງເພີ່ມທະວີການຮ່ວມມື ແລະ ການດຳເນີນງານເພື່ອກວດກາ ແລະ ຄວາມຄຸມຢາເສບຕິດຢ່າງເຂັ້ມງວດ ເພື່ອໃຫ້ບັນລຸເປົ້າໝາຍ ແລະ ເຈດຕະນາລົມຂອງຖະແຫຼງການຜູ້ນຳອາຊຽນ ວ່າດ້ວຍການເຮັດໃຫ້ອາຊຽນເປັນເຂດປອດຢາເສບຕິດ ໃນປີ 2015 (ASEAN Leaders' Declaration on Drug Free ASEAN 2015).

17. ກອງປະຊຸມສະໜັບສະໜູນ ໃຫ້ໜ່ວຍງານທີ່ກ່ຽວຂ້ອງທັງສອງຝ່າຍສືບຕໍ່ຈັດຕັ້ງປະຕິບັດຕາມການຕົກລົງຂອງກອງປະຊຸມສອງຝ່າຍ ວ່າດ້ວຍການຮ່ວມມື ເພື່ອຄວບຄຸມຢາເສບຕິດ ລະຫວ່າງ ສປປ ລາວ ແລະ

ຣາຊະອານາຈັກໄທ ຄັ້ງທີ 14 ໃນລະຫວ່າງ ວັນທີ 13-14 ທັນວາ 2012 ທີ່ ເມືອງທ່າແຂກ, ແຂວງຄໍາມ່ວນ ໃຫ້ເປັນຮູບປະທໍາ.

18. ກອງປະຊຸມສະໜັບສະໜູນ ໃຫ້ທັງສອງຝ່າຍຈັດຕັ້ງປະຕິບັດຕາມການຕົກລົງຂອງກອງປະຊຸມຮ່ວມມືດ້ານການແກ້ໄຂບັນຫາຢາເສບຕິດລະດັບທ້ອງຖິ່ນ ລະຫວ່າງ ແຂວງສະຫວັນນະເຂດ, ສາລະວັນ ແລະ ຈໍາປາສັກ ຂອງ ສປປ ລາວ ກັບ ຈັງຫວັດອຸບົນຣາຊະທານີ ຂອງຣາຊະອານາຈັກໄທ ໃນວັນທີ 14-15 ສິງຫາ 2014 ທີ່ຈັງຫວັດອຸບົນຣາຊະທານີ ໃຫ້ເປັນຮູບປະທໍາ.

19. ກອງປະຊຸມຮັບຊາບວ່າ ຝ່າຍໄທຍິນດີຮັບເປັນເຈົ້າພາບຈັດກອງປະຊຸມສອງຝ່າຍວ່າດ້ວຍການຮ່ວມມືເພື່ອຄວບຄຸມຢາເສບຕິດ ລະຫວ່າງ ສປປ ລາວ ແລະ ຣາຊະອານາຈັກໄທ ຄັ້ງທີ 15 ໃນປີ 2015.

<u>ກອງປະຊຸມຄະນະເຈົ້າແຂວງ ແລະ ຜູ້ວ່າຣາຊະການຈັງຫວັດຊາຍແດນ ລາວ-ໄທ.</u>

20. ກອງປະຊຸມຮັບຊາບວ່າ ຝ່າຍລາວຍິນດີເປັນເຈົ້າພາບຈັດກອງປະຊຸມຄະນະເຈົ້າແຂວງ ແລະ ຜູ້ວ່າຣາຊະການຈັງຫວັດຊາຍແດນ ລາວ-ໄທ ຄັ້ງທີ 10 ໃນປີ 2015.

<u>ການຮ່ວມມືກໍລະນີບຸກຄົນຂອງແຕ່ລະຝ່າຍຖືກຈັບກຸມຄຸມຂັງ</u>

21. ກອງປະຊຸມເຫັນດີ ໃຫ້ເຈົ້າໜ້າທີ່ ທີ່ກ່ຽວຂ້ອງຂອງທັງສອງຝ່າຍ ປະຕິບັດຕາມຫຼັກການໃນການຈັບກຸມຄຸມຂັງບຸກຄົນສັນຊາດຂອງແຕ່ລະຝ່າຍ, ເຊິ່ງເຫັນດີຮ່ວມກັນໃນກອງປະຊຸມຄະນະກໍາມາທິການຮ່ວມ ວ່າດ້ວຍການຮ່ວມມື ລາວ-ໄທ ຄັ້ງທີ 18 ຢ່າງເຂັ້ມງວດ ພ້ອມທັງຮັບປະກັນຄວາມປອດໄພໃຫ້ແກ່ຜູ້ຕ້ອງຫາ ແລະ ນັກໂທດ, ລວມທັງແຈ້ງໃຫ້ເຈົ້າໜ້າທີ່ສະຖານເອກອັກຄະລັດຖະທູດ, ສະຖານກົງສຸນໃຫຍ່ຂອງແຕ່ລະຝ່າຍຊາບໃນເວລາອັນຄວນ ແລະ ອໍານວຍຄວາມສະດວກໃນການເຂົ້າພົບຜູ້ຕ້ອງຫາ ແລະ ນັກໂທດ ຕາມລະບຽບພາຍໃນຂອງແຕ່ລະຝ່າຍ.

22. ກອງປະຊຸມສະໜັບສະໜູນ ໃຫ້ໜ່ວຍງານທີ່ກ່ຽວຂ້ອງທັງສອງຝ່າຍ ເລັ່ງລັດການໂອນຕົວຜູ້ຖືກຕັດສິນລົງໂທດ ໃຫ້ເປັນໄປຕາມສົນທິສັນຍາ ວ່າດ້ວຍການໂອນຕົວຜູ້ຖືກຕັດສິນລົງໂທດ ແລະ ການຮ່ວມມືໃນການປະຕິບັດຄໍາຕັດສິນຄະດີອາຍາ, ລວມທັງສະໜັບສະໜູນການແລກປ່ຽນບັນຊີລາຍຊື່ບຸກຄົນສັນຊາດຂອງຕົນ ທີ່ຖືກຈັບກຸມຄຸມຂັງຢູ່ປະເທດຂອງແຕ່ລະຝ່າຍ, ໂດຍທັງສອງຝ່າຍຈະສືບຕໍ່ປັບປຸງບັນຊີລາຍຊື່ຢ່າງຕໍ່ເນື່ອງ ເພື່ອແລກປ່ຽນກັນປີລະ 1 ຄັ້ງ.

<u>ການຮ່ວມມືໃນການ ເປີດ-ປິດ, ຍົກລະດັບດ່ານຜ່ານແດນ ແລະ ການອໍານວຍຄວາມສະ ດວກໃນການເຂົ້າ-ອອກເມືອງ ແລະ ການສັນຈອນຕາມບໍລິເວນຊາຍແດນ ລາວ-ໄທ.</u>

23. ກອງປະຊຸມຮັບຊາບວ່າ ຝ່າຍລາວໄດ້ປັບປຸງຮ່າງຈົດໝາຍແລກປ່ຽນ ເພື່ອການແກ້ໄຂເອກະສານຄັດຕິດໝາຍເລກ I, II, III ຂອງຂໍ້ຕົກລົງ ວ່າດ້ວຍການເດີນທາງຂ້າມແດນ ລະຫວ່າງລັດຖະບານ ແຫ່ງ ສປປ ລາວ ແລະ ລັດຖະບານ ແຫ່ງ ຣາຊະອານາຈັກໄທ ສະບັບລົງວັນທີ 20 ມິຖຸນາ 1997 ແລະ ເອກະສານທີ່ກ່ຽວຂ້ອງໃຫ້ຝ່າຍໄທພິຈາລະນາ.



ດໜ

ດພກ

24. ກອງປະຊຸມເຫັນດີ ໃຫ້ໜ່ວຍງານທີ່ກ່ຽວຂ້ອງທັງສອງຝ່າຍປຶກສາຫາລືຮ່ວມກັນ ກ່ຽວກັບລາຍລະອຽດ ເພື່ອດຳເນີນການເປີດ ແລະ ຍົກລະດັບດ່ານ ຕາມທີ່ໄດ້ປຶກສາຫາລືໃນກອງປະຊຸມຄະນະເຈົ້າແຂວງ ແລະ ຜູ້ວ່າຣາຊະການຈັງຫວັດຊາຍແດນ ລາວ-ໄທ ຄັ້ງທີ 9 ໃນລະຫວ່າງວັນທີ 6 - 8 ມີນາ 2013 ທີ່ ບາງກອກ ໃຫ້ເປັນຮູບປະທຳໂດຍໄວ ດັ່ງລຸ່ມນີ້:

1) ຝ່າຍໄທໄດ້ຍົກລະດັບດ່ານປະເພນີພູດູ່ (ຈຸດຜ່ອນປົນການຄ້າ) ບ້ານມ່ວງເຈັດຕົ້ນ, ອຳເພີບ້ານໂຄກ, ຈັງຫວັດອຸດຕະຣະດິດ ຂຶ້ນເປັນດ່ານສາກົນ (ຈຸດຜ່ານແດນຖາວອນ) ໃນວັນທີ 3 ພຶດສະພາ 2014 ແລະ ຝ່າຍລາວຈະຍົກລະດັບດ່ານທ້ອງຖິ່ນພູດູ່, ບ້ານຜາແກ້ວ, ເມືອງປາກລາຍ, ແຂວງໄຊຍະບຸລີ ຂຶ້ນເປັນດ່ານ ສາກົນ ໃນໄລຍະຕົ້ນປີ 2015.

2) ຝ່າຍລາວກະກຽມຄວາມພ້ອມ ໃນການຍົກລະດັບດ່ານທ້ອງຖິ່ນບ້ານວັງ, ເມືອງໝື່ນ, ແຂວງວຽງຈັນ ເປັນດ່ານສາກົນ, ເຊິ່ງກົງກັນຂ້າມກັບດ່ານສາກົນຄົກໄຜ່ (ຈຸດຜ່ານແດນຖາວອນ), ຕຳບົນປາກຊົມ, ອຳເພີປາກຊົມ, ຈັງຫວັດເລີຍ.

3) ຝ່າຍລາວກະກຽມຄວາມພ້ອມ ໃນການຍົກລະດັບດ່ານທ້ອງຖິ່ນບ້ານປາກຕະພານ, ເມືອງລະຄອນເພັງ, ແຂວງສາລະວັນ ຂຶ້ນເປັນດ່ານສາກົນ, ເຊິ່ງກົງກັນຂ້າມກັບ ດ່ານສາກົນປາກແຊງ (ຈຸດຜ່ານແດນຖາວອນ ) ອຳເພີນາຕານ, ຈັງຫວັດອຸບົນຣາຊະທານີ.

4) ກະກຽມຄວາມພ້ອມໃນການຍົກລະດັບດ່ານທ້ອງຖິ່ນບ້ານປາງມອນ, ເມືອງຄອບ, ແຂວງໄຊຍະບຸລີ ຂຶ້ນ ເປັນດ່ານສາກົນ ແລະ ດ່ານປະເພນີບ້ານຮວກ (ຈຸດຜ່ອນປົນການຄ້າ), ອຳເພີພູຊາງ, ຈັງຫວັດພະເຢົາ ຂຶ້ນ ເປັນດ່ານຖາວອນ.

5) ສອງຝ່າຍໄດ້ຂະຫຍາຍວັນເວລາ ເປີດ-ປິດ ດ່ານທ້ອງຖິ່ນບ້ານໜອງດາ, ເມືອງສີໂຄດຕະບອງ, ນະຄອນ ຫຼວງວຽງຈັນ ແລະ ດ່ານປະເພນີບ້ານໝໍ້ (ຈຸດຜ່ອນປົນການຄ້າ), ອຳເພີສີຊຽງໃໝ່, ຈັງຫວັດໜອງຄາຍ ຈາກ 2 ວັນ ເປັນ 3 ວັນ ຕໍ່ອາທິດ ໃນປີ 2013.

6) ສອງຝ່າຍໄດ້ຂະຫຍາຍເວລາ ເປີດ-ປິດ ດ່ານທ້ອງຖິ່ນບ້ານທວາຍ, ເມືອງທ່າພະບາດ, ແຂວງບໍລິຄຳໄຊ ແລະ ດ່ານປະເພນີບ້ານເປັ້ງຈານ (ຈຸດຜ່ອນປົນການຄ້າ), ອຳເພີລັດຕະນະວາປີ, ຈັງຫວັດໜອງຄາຍ ຈາກ 2 ວັນ ເປັນ 3 ວັນ ຕໍ່ອາທິດ ໃນປີ 2014.

7) ສອງຝ່າຍສືບຕໍ່ສຶກສາຄວາມເປັນໄປໄດ້ ໃນການຍົກລະດັບດ່ານປະເພນີບ້ານທ່າສະອາດ, ເມືອງປາກກະດິງ ແຂວງບໍລິຄຳໄຊ ເປັນດ່ານສາກົນ ແລະ ຍົກລະດັບປະເພນີບ້ານໂພໄຊ (ຈຸດຜ່ອນປົນການຄ້າ), ຕຳບົນໄຜ່ ລ້ອມ, ອຳເພີບ້ານແພງ, ຈັງຫວັດນະຄອນພະນົມ ເປັນດ່ານສາກົນ (ຈຸດຜ່ານແດນຖາວອນ).

8) ໃຫ້ສືບຕໍ່ກະກຽມຄວາມພ້ອມ ໃນການຍົກລະດັບດ່ານທ້ອງຖິ່ນບ້ານເຫຼົ່າໝາກຫຸດ, ເມືອງໄຊພູທອງ, ແຂວງສະຫວັນນະເຂດ ເປັນດ່ານສາກົນ ແລະ ດ່ານປະເພນີບ້ານຍັກຄຸ (ຈຸດຜ່ອນປົນການຄ້າ), ອຳເພີຊານຸ ມານ, ຈັງຫວັດອຳນາດຈະເລີນ ເປັນດ່ານສາກົນ (ຈຸດຜ່ານແດນຖາວອນ).

9) ໃຫ້ສືບຕໍ່ກະກຽມຄວາມພ້ອມໃນການຍົກລະດັບດ່ານປະເພນີບ້ານນາຂ່າ, ເມືອງບໍ່ແຕນ, ແຂວງໄຊຍະບຸລີ ເປັນດ່ານທ້ອງຖິ່ນ ແລະ ຍົກລະດັບດ່ານປະເພນີບ້ານນາຂ່າ (ຈຸດຜ່ອນປົນການຄ້າ), ຕຳບົນປາກໝັນ, ອຳເພີດ່ານຊ້າຍ, ຈັງຫວັດເລີຍ ເປັນດ່ານສາກົນ (ຈຸດຜ່ານແດນຖາວອນ).

10) ໃຫ້ສືບຕໍ່ສຶກສາຄວາມເປັນໄປໄດ້ໃນການເປີດດ່ານປະເພນີບ້ານແຄນ, ເມືອງທົ່ງມີໄຊ, ແຂວງໄຊຍະບູລີ ກັບ ດ່ານປະເພນີບ້ານນ້ຳປີ້ (ຈຸດຜ່ອນປັນການຄ້າ), ອຳເພີວຽງສາ ຈັງຫວັດນ່ານ.

25. ກອງປະຊຸມຮັບຊາບ ຝ່າຍໄທໄດ້ຍົກລະດັບດ່ານປະເພນີບ້ານສົບຮວກ (ຈຸດຜ່ອນປັນການຄ້າ) ອຳເພີຊຽງແສນ ຈັງຫວັດຊຽງລາຍ ເປັນດ່ານສາກົນ (ຈຸດຜ່ານແດນຖາວອນ) ໃນວັນທີ 3 ພຶດສະພາ 2013, ເຊິ່ງກົງກັນຂ້າມກັບດ່ານສາກົນ ສາມຫຼ່ຽມຄຳຂອງ ສປປ ລາວ.

<u>ການຮ່ວມມືໃນການຄຸ້ມຄອງ ແລະ ປ້ອງກັນຕະຝັ່ງເຈື່ອນຕາມລຳແມ່ນ້ຳຂອງ ແລະ ແມ່ນ້ຳເຫືອງ.</u>

26. ກອງປະຊຸມເຫັນດີ ໃຫ້ທັງສອງຝ່າຍປະຕິບັດຕາມຂໍ້ກຳນົດດ້ານເຕັກນິກ ກ່ຽວກັບການປ້ອງກັນຕະຝັ່ງເຈື່ອນ ແລະ ການຂຸດຄົ້ນແຮ່ຊາຍຕາມແມ່ນ້ຳຂອງ ແລະ ນ້ຳເຫືອງ ຕາມບົດບັນທຶກກອງປະຊຸມຄະນະກຳມະການຮ່ວມ ລາວ-ໄທ ເພື່ອຄຸ້ມຄອງການດຳເນີນກິດຈະການຕ່າງໆ ຕາມລຳແມ່ນ້ຳຂອງ ແລະ ນ້ຳເຫືອງ ຄັ້ງທີ 3 ແລະ ເຂັ້ມງວດຕໍ່ຜູ້ປະກອບການທີ່ກະທຳຜິດ ໃຫ້ປະຕິບັດຕາມຂໍ້ກຳນົດດັ່ງກ່າວ.

27. ກອງປະຊຸມຮັບຊາບວ່າ ຝ່າຍລາວຈະເປັນເຈົ້າພາບຈັດກອງປະຊຸມຄະນະອະນຸກຳມະການດ້ານເຕັກນິກຮ່ວມ ພາຍໃຕ້ຄະນະກຳມະການຮ່ວມ ລາວ-ໄທ ເພື່ອຄຸ້ມຄອງການດຳເນີນກິດຈະການຕ່າງໆ ຕາມລຳແມ່ນ້ຳຂອງ ແລະ ນ້ຳເຫືອງ ຄັ້ງທີ 4 ໃນເດືອນພຶດສະພາ 2015.

<u>ການຮ່ວມມືດ້ານກົດໝາຍ ແລະ ຍຸຕິທຳ</u>

28. ກອງປະຊຸມສະແດງຄວາມຍິນດີ ຕໍ່ການຢ້ຽມຢາມ ແລະ ທັດສະນະສຶກສາ ຂອງຄະນະນຳຂັ້ນສູງ ກະຊວງຍຸຕິທຳ ສປປ ລາວ ທີ່ສຳນັກງານສານຍຸຕິທຳ ແຫ່ງ ຣາຊະອານາຈັກໄທ ໃນວັນທີ 6 ສິງຫາ 2013 ແລະ ສະໜັບສະໜູນໃຫ້ໜ່ວຍງານທີ່ກ່ຽວຂ້ອງດ້ານກົດໝາຍ ແລະ ຍຸຕິທຳຂອງທັງສອງປະເທດຮ່ວມມື ແລະ ແລກ ປ່ຽນປະສົບການດ້ານກົດໝາຍ ແລະ ຍຸຕິທຳ ຢ່າງສະໝ່ຳສະເໝີ.

29. ກອງປະຊຸມເຫັນດີ ແລະ ສະໜັບສະໜູນໃຫ້ໜ່ວຍງານທີ່ກ່ຽວຂ້ອງຂອງສອງປະເທດສືບຕໍ່ເລັ່ງລັດການສ້າງຂໍ້ຕົກລົງວ່າດ້ວຍການຊ່ວຍເຫຼືອໃນຄະດີແພ່ງ, ການຄ້າ ແລະ ການຮ່ວມມືອານຸຍາໂຕຕຸລາການ, ເຊິ່ງພາກສ່ວນທີ່ກ່ຽວຂ້ອງຂອງຝ່າຍລາວກຳລັງພິຈາລະນາ.

30. ກອງປະຊຸມສະແດງຄວາມຍິນດີ ຕໍ່ການຢ້ຽມຢາມ ສປປ ລາວ ຂອງຄະນະນຳຂັ້ນສູງຂອງສານປົກຄອງສູງສຸດ ແຫ່ງ ຣາຊະອານາຈັກໄທ ໃນລະຫວ່າງວັນທີ 21-23 ສິງຫາ 2014 ເພື່ອແລກປ່ຽນບົດຮຽນກ່ຽວກັບການສ້າງຕັ້ງສານປົກຄອງ ແລະ ການດຳເນີນຄະດີປົກຄອງ ໃນ ສປປ ລາວ.

31. ກອງປະຊຸມສະແດງຄວາມຍິນດີ ຕໍ່ຜົນການປຶກສາຫາລື ລະຫວ່າງ ສານປະຊາຊົນສູງສຸດ ແຫ່ງ ສປປ ລາວ ແລະ ສານປົກຄອງ ແຫ່ງ ຣາຊະອານາຈັກໄທ, ລວມທັງການໃຫ້ທຶນຝຶກອົບຮົມ ໃນຫຼັກສູດຄວາມຮູ້ກ່ຽວກັບຫຼັກກົດໝາຍປົກຄອງ ແລະ ສານປົກຄອງ ໃຫ້ແກ່ຝ່າຍລາວ.

32. ກອງປະຊຸມສະແດງຄວາມຍິນດີ ຕໍ່ການລົງນາມໃນບົດບັນທຶກຄວາມເຂົ້າໃຈ ວ່າດ້ວຍການຮ່ວມມືເຊິ່ງກັນແລະກັນ ກ່ຽວກັບວຽກງານຍຸຕິທຳດ້ານປົກຄອງ ລະຫວ່າງ ສານປະຊາຊົນສູງສຸດ ແຫ່ງ ສປປ ລາວ ແລະ ສຳນັກງານສານປົກຄອງ ແຫ່ງ ຣາຊະອານາຈັກໄທ ໃນວັນທີ 25 ກຸມພາ 2013 ແລະ ສະໜັບສະ

ໜູນໃຫ້ໜ່ວຍງານທີ່ກ່ຽວຂ້ອງທັງສອງຝ່າຍ ຈັດຕັ້ງປະຕິບັດບົດບັນທຶກຄວາມເຂົ້າໃຈດັ່ງກ່າວໃຫ້ເປັນຮູບປະທໍາ.

33. ກອງປະຊຸມສະແດງຄວາມຍິນດີ ຕໍ່ການຮ່ວມມື ແລະ ການແລກປ່ຽນການຢ້ຽມຢາມ ລະຫວ່າງອົງການໄອຍະການປະຊາຊົນສູງສຸດ ແຫ່ງ ສປປ ລາວ ແລະ ສໍານັກງານໄອຍະການສູງສຸດ ແຫ່ງ ຣາຊະອານາຈັກໄທ, ພ້ອມທັງ ໃຫ້ທຶນຝຶກອົບຮົມແກ່ພະນັກງານອົງການໄອຍະການປະຊາຊົນສູງສຸດ ຂອງ ສປປ ລາວກ່ຽວກັບການປະຕິບັດງານການຄຸ້ມຄອງສິດທິ ແລະ ການຊ່ວຍເຫຼືອທາງກົດໝາຍຕໍ່ປະຊາຊົນ ແລະສະແດງຄວາມຍິນດີທີ່ຝ່າຍໄທ ຈັດກອງປະຊຸມປຶກສາຫາລືກ່ຽວກັບການຮ່ວມມືໃນການປ້ອງກັນອາຊະຍາກໍາ ລະຫວ່າງວັນທີ 19-20 ກຸມພາ 2014 ທີ່ອໍາເພີຊຽງຂອງ, ຈັງຫວັດຊຽງລາຍ ເພື່ອຮອງຮັບການເຂົ້າເປັນປະຊາຄົມເສດຖະກິດອາຊຽນ, ເຊິ່ງຝ່າຍລາວໄດ້ຮັບເຊີນເຂົ້າຮ່ວມກອງປະຊຸມດັ່ງກ່າວ.

34. ກອງປະຊຸມຮັບຊາບວ່າ ສໍານັກງານໄອຍະການສູງສຸດ ແຫ່ງ ຣາຊະອານາຈັກໄທ ຈະເປັນເຈົ້າພາບຈັດກອງປະຊຸມຮ່ວມມືສອງຝ່າຍ ລາວ-ໄທ ໃນການຢຸດຕິການໃຊ້ຄວາມຮຸນແຮງຕໍ່ເດັກ (Elimination of Violence against Children) ໃນວັນທີ 23 ມີນາ 2015 ທີ່ ບາງກອກ.

<u>ການຮ່ວມມືຕ້ານການຄ້າມະນຸດ</u>

35. ກອງປະຊຸມສະແດງຄວາມຍິນດີ ຕໍ່ຜົນສໍາເລັດຂອງກອງປະຊຸມທະວິພາຄີ ລາວ-ໄທ ເພື່ອສ້າງແຜນງານປະຕິບັດຕາມບົດບັນທຶກຄວາມເຂົ້າໃຈ ລາວ-ໄທ ວ່າດ້ວຍການຮ່ວມມືຕ້ານການຄ້າມະນຸດ ໂດຍສະເພາະແມ່ຍິງ ແລະ ເດັກນ້ອຍ ໄລຍະທີ 3 (2013 - 2015) ໃນລະຫວ່າງວັນທີ 27 - 28 ທັນວາ 2012 ທີ່ຈັງ ຫວັດອຸດອນທານີ ໂດຍສະເພາະການສ້າງແຜນງານການປ້ອງກັນ ແລະ ເຝົ້າລະວັງການຄ້າມະນຸດລະຫວ່າງ ປະເທດ ແລະ ສະໜັບສະໜູນໃຫ້ໜ່ວຍງານທີ່ກ່ຽວຂ້ອງຂອງທັງສອງຝ່າຍ ຜັນຂະຫຍາຍການຮ່ວມມືໃຫ້ບັນລຸເປົ້າໝາຍທີ່ຕັ້ງໄວ້ ເພື່ອຄວາມໝັ້ນຄົງຂອງພາກພື້ນ.

36. ກອງປະຊຸມສະໜັບສະໜູນ ໃຫ້ໜ່ວຍງານທີ່ກ່ຽວຂ້ອງລະດັບແຂວງ-ຈັງຫວັດ ແລະ ລະດັບເມືອງ-ອໍາເພີສືບຕໍ່ຮ່ວມມືກັນຢ່າງໃກ້ຊິດ ເພື່ອຕ້ານການຄ້າມະນຸດໃຫ້ມີປະສິດທິພາບ ໂດຍສະເພາະຢູ່ໃນຈໍານວນ 6 ພື້ນທີ່ທີ່ມີຄວາມສ່ຽງ ຄື: 1) ນະຄອນຫຼວງວຽງຈັນ-ຈັງຫວັດໜອງຄາຍ, 2) ແຂວງວຽງຈັນ-ຈັງຫວັດເລີຍ, 3) ແຂວງໄຊຍະບູລີ-ຈັງຫວັດເລີຍ-ຈັງຫວັດອຸດຕະຣະດິດ, 4) ແຂວງບໍລິຄໍາໄຊ-ຈັງຫວັດບຶງການ, 5) ແຂວງບໍ່ແກ້ວ-ຈັງຫວັດຊຽງລາຍ, 6) ແຂວງຄໍາມ່ວນ-ຈັງຫວັດນະຄອນພະນົມ, ແລະ ເພີ່ມຕື່ມອີກ 2 ພື້ນທີ ຄື: 1) ແຂວງສະຫວັນນະເຂດ-ຈັງຫວັດມຸກດາຫານ-ຈັງຫວັດອໍານາດຈະເລີນ ແລະ 2) ແຂວງຈໍາປາສັກ-ແຂວງສາລະວັນ-ຈັງຫວັດອຸບົນ ຣາຊະທານີ.

37. ກອງປະຊຸມສະແດງຄວາມຍິນດີ ຕໍ່ການຮ່ວມມືຂອງລັດຖະບານທັງສອງປະເທດ ໃນການສະກັດກັ້ນ ແລະຕ້ານການຄ້າມະນຸດ ໂດຍສະເພາະແມ່ນການຄຸ້ມຄອງ, ການສົ່ງກັບ ແລະ ຄືນສູ່ສັງຄົມ ຂອງຜູ້ຕົກເປັນເຫຍື່ອຈາກການຄ້າມະນຸດ.

38. ກອງປະຊຸມຮັບຊາບວ່າ ເລື່ອງທີ່ທັງສອງຝ່າຍໄດ້ປຶກສາຫາລື ແລະ ປະສານງານໃນການດຳເນີນໂຄງການກໍ່ສ້າງສູນຮອງຮັບຜູ້ທີ່ຖືກເຄາະຮ້າຍຈາການຄ້າມະນຸດ ແຕ່ປີ 2014; ຝ່າຍລາວຍັງຢືນຢັນຂໍຮັບການຮ່ວມມືດັ່ງກ່າວເຊິ່ງຝ່າຍໄທຈະນຳໄປພິຈາລະນາ ແລະ ແຈ້ງໃຫ້ຝ່າຍລາວຊາບຕໍ່ໄປ.

39. ກອງປະຊຸມສະໜັບສະໜູນໃຫ້ ພາກສ່ວນທີ່ກ່ຽວຂ້ອງທັງສອງຝ່າຍ ປຶກສາຫາລືຮ່ວມກັນໃນລາຍລະອຽດເພື່ອປັບປຸງແກ້ໄຂເນື້ອໃນບົດບັນທຶກຄວາມເຂົ້າໃຈ ວ່າດ້ວຍການຮ່ວມມືດ້ານການສະກັດກັ້ນ ແລະ ຕ້ານການຄ້າມະນຸດ ໂດຍສະເພາະແມ່ຍິງ ແລະ ເດັກນ້ອຍ ລາວ-ໄທ, ສະບັບປີ 2005 ເພື່ອໃຫ້ເນື້ອໃນແທດເໝາະກັບສະພາບຕົວຈິງໃນປະຈຸບັນ.

<u>ການຮ່ວມມືດ້ານແຮງງານ</u>

40. ກອງປະຊຸມສະແດງຄວາມຍິນດີ ທີ່ຝ່າຍລາວໄດ້ສົ່ງໜ່ວຍງານເພື່ອປັບສະຖານະພາບແຮງງານລາວ ທີ່ເຮັດວຽກບໍ່ຖືກຕ້ອງຕາມກົດໝາຍ ຢູ່ຣາຊະອານາຈັກໄທ ຈຳນວນ ທັງໝົດ 222,839 ຄົນ ໃນນັ້ນເປັນແຮງງານ ຈຳນວນ 213,689 ແລະ ຜູ້ຕິດຕາມ ຈຳນວນ 9,150 ຄົນ ໃນວັນທີ 3 ມັງກອນ 2015, ເຊິ່ງຝ່າຍໄທຍິນດີໃຫ້ການຮ່ວມມືກັບຝ່າຍລາວ.

41. ກອງປະຊຸມຮັບຊາບວ່າ ຝ່າຍໄທຍິນດີເປັນເຈົ້າພາບຈັດກອງປະຊຸມ ລະດັບເຈົ້າໜ້າທີ່ອາວຸໂສ ຄັ້ງທີ 10 ແລະ ລະດັບລັດຖະມົນຕີ ຄັ້ງທີ 3.

42. ກອງປະຊຸມຮັບຊາບວ່າ ຜົນຂອງກອງປະຊຸມລະດັບວິຊາການ ລາວ-ໄທ ໃນລະຫວ່າງວັນທີ 2-3 ກັນຍາ 2014 ທີ່ ຈັງຫວັດໜອງຄາຍ, ເຊິ່ງສອງຝ່າຍເຫັນດີໃຫ້ແຮງງານລາວທີ່ເຮັດວຽກຢູ່ຕາມບໍລິເວນຊາຍແດນ ກໍລະນີໄປເຊົ້າ-ແລງກັບ ຫຼື ຕາມລະດູການ ໃຫ້ນຳໃຊ້ໜັງສືຜ່ານແດນ (Passport) ໃນການເດີນທາງ. ຝ່າຍໄທໄດ້ແຈ້ງໃຫ້ຝ່າຍລາວຊາບວ່າ ປະຈຸບັນຝ່າຍໄທພວມແກ້ໄຂເນື້ອໃນກົດໝາຍ ກ່ຽວກັບການອະນຸຍາດໃຫ້ເຮັດວຽກຕາມບໍລິເວນຊາຍແດນ.

43. ກອງປະຊຸມຮັບຊາບ ຂໍ້ສະເໜີຂອງຝ່າຍໄທໃນການເຮັດ Smart Card ແທນ Border Pass ສຳລັບແຮງງານທີ່ເຮັດວຽກຢູ່ຕາມເຂດຊາຍແດນ ກໍລະນີໄປເຊົ້າ-ແລງກັບ ຫຼື ຕາມລະດູການ.

44. ກອງປະຊຸມຮັບຊາບວ່າ ພາກສ່ວນທີ່ກ່ຽວຂ້ອງທັງສອງຝ່າຍຈະປຶກສາຫາລືຮ່ວມກັນໃນການປັບປຸງເນື້ອໃນບົດບັນທຶກຄວາມເຂົ້າໃຈວ່າດ້ວຍການຮ່ວມມືດ້ານການຈ້າງແຮງງານ ລາວ-ໄທ ສະບັບປີ 2002 ແລະເຫັນດີໃຫ້ຈັດກອງປະຊຸມປຶກສາຫາລືລະດັບວິຊາການສະເພາະ ຕາມການຕົກລົງເຫັນດີໃນກອງປະຊຸມລະດັບລັດຖະມົນຕີແຮງງານລາວ-ໄທ ຄັ້ງທີ 2 ແລະ ກອງປະຊຸມເຈົ້າໜ້າທີ່ອາວຸໂສ ຄັ້ງທີ 9 ໃນປີ 2013.

45. ກອງປະຊຸມສະແດງຄວາມຍິນດີ ແລະ ສະໜັບສະໜູນໃຫ້ທັງສອງຝ່າຍມີການຮ່ວມມືເພື່ອພັດທະນາສີມືແຮງງານລາວໃນບໍລິເວນຊາຍແດນ ລາວ-ໄທ.

<u>ການຮ່ວມມືດ້ານເສດຖະກິດ</u>

<u>ການຮ່ວມມືດ້ານໄຟຟ້າ ແລະ ພະລັງງານອື່ນໆ</u>

46. ກອງປະຊຸມສະໜັບສະໜູນໃຫ້ ພາກສ່ວນທີ່ກ່ຽວຂ້ອງທັງສອງຝ່າຍ ປຶກສາຫາລືລາຍລະອຽດຮ່ວມກັນກ່ຽວກັບ ການນຳໃຊ້ສາຍສົ່ງຂອງໄທ ເພື່ອສົ່ງໄຟຟ້າຈາກ ສປປ ລາວ ໄປຍັງປະເທດມາເລເຊຍ ແລະ

ສິງກະໂປ ຕາມການເຫັນດີ ລະຫວ່າງສອງນາຍົກລັດຖະມົນຕີ ໃນວັນທີ 26 ພະຈິກ 2014 ໃນໂອກາດ ຢ້ຽມຢາມ ສປປ ລາວ ຢ່າງເປັນທາງການ ຂອງພະນະທ່ານ ພົນເອກ ປຣະຍຸດ ຈັນໂອຊາ, ນາຍົກລັດຖະມົນຕີ ແຫ່ງ ຣາຊະອາ ນາຈັກໄທ.

47. ກອງປະຊຸມສະໜັບສະໜູນ ໃຫ້ພາກສ່ວນທີ່ກ່ຽວຂ້ອງຂອງທັງສອງຝ່າຍຫາລືຮ່ວມກັນ ກ່ຽວກັບລາຄາໄຟຟ້າ ລະຫວ່າງ ສປປ ລາວ ແລະ ຣາຊະອານາຈັກໄທ.

48. ກອງປະຊຸມສະແດງຄວາມຍິນດີ ຜົນຂອງກອງປະຊຸມລະຫວ່າງກະຊວງພະລັງງານ ແລະ ບໍ່ແຮ່ ສປປ ລາວ ແລະ ກະຊວງພະລັງງານ ຣາຊະອານາຈັກໄທ, ເຊິ່ງທັງສອງຝ່າຍເຫັນດີໃຫ້ມີການສ້າງຕັ້ງຄະນະເຮັດວຽກໃນຂະແໜງການຮ່ວມມື ລະຫວ່າງ ສປປ ລາວ ແລະ ຣາຊະອານາຈັກໄທ. ໂດຍປະກອບມີໜ້າວຽກຕົ້ນຕໍ ຄື: ຮ່ວມກັນພິຈາລະນາ ແລະ ສຶກສາການແລກປ່ຽນພະລັງງານໃນອານາຄົດ ຫຼື ປັບປຸງ ແລະ ປະສານການວາງແຜນເຊື່ອມຕໍ່ລະບົບພະລັງງານ, ການດໍາເນີນງານໃຫ້ມີຄວາມກົມກຽວ ແລະ ການປະເມີນກົນໄກການເຈລະຈາຊື້ຂາຍພະລັງງານລະຫວ່າງລັດຖະບານ ລາວ ແລະ ລັດຖະບານໄທ ຫຼື ລະຫວ່າງ EDL ແລະ EGAT.

49. ກອງປະຊຸມຮັບຊາບ ຄວາມຄືບໜ້າໃນການສຶກສາຄວາມເປັນໄປໄດ້ ໃນການຊື້-ຂາຍ ໄຟຟ້າຜ່ານລະບົບສາຍສົ່ງ 115 ກິໂລໂວນ ລະຫວ່າງເມືອງແກ່ນທ້າວ, ແຂວງໄຊຍະບູລີ ສປປ ລາວ ກັບ ອໍາເພີທ່າລີ່, ຈັງຫວັດເລີຍ ຣາຊະອານາຈັກໄທ ຢູ່ໃນໄລຍະການດໍາເນີນຕາມຂັ້ນຕອນ, ສ່ວນລະຫວ່າງແຂວງບໍ່ແກ້ວ ສປປ ລາວ ກັບອໍາເພີຊຽງຂອງ, ຈັງຫວັດຊຽງຣາຍ, ຣາຊະອານາຈັກໄທ ໃຫ້ກະຊວງພະລັງງານ ແລະ ບໍ່ແຮ່ ເຮັດໜັງສືແຈ້ງກະຊວງພະລັງງານໄທ ເພື່ອພິຈາລະນາບັນຫາດັ່ງກ່າວ ໃຫ້ລັດວິສະຫະກິດໄຟຟ້າລາວ ແລະ ການໄຟຟ້າຝ່າຍຜະລິດແຫ່ງປະເທດໄທ ປຶກສາຫາລືລາຍລະອຽດຮ່ວມກັນ ແລະ ຈັດຕັ້ງປະຕິບັດໂດຍໄວ.

50. ກອງປະຊຸມຮັບຊາບ ສໍານັກງານການຮ່ວມມືພັດທະນາເສດຖະກິດກັບປະເທດເພື່ອນບ້ານ (ອົງການມະຫາຊົນ) ຫຼື ສພພ (NEDA) ໄດ້ໃຫ້ການຊ່ວຍເຫຼືອທາງວິຊາການ ເພື່ອສຶກສາເຖິງຄວາມເໝາະສົມ ແລະ ອອກແບບກໍ່ສ້າງລະບົບສາຍສົ່ງໄຟຟ້າ 115 ກິໂລໂວນ ຈາກສະຖານນີໄຟຟ້ານໍ້າທຸງ ແລະ ກໍ່ສ້າງສະຖານີໄຟຟ້າຫ້ວຍຊາຍ ໄລຍະທາງ 106.6 ວົງຈອນກິໂລແມັດ ຈາກສະຖານີ ໄຟຟ້າຫວ້ຍຊາຍ-ບ້ານຂອນແກ້ວ ໄລຍະທາງ 8.8 ວົງຈອນກິໂລແມັດ, ການປັບປຸງສະຖານນີໄຟຟ້ານໍ້າທຸງ ແລະ ການກໍ່ສ້າງສະຖານນີໄຟຟ້າຫ້ວຍຊາຍ ຕະຫຼອດຈົນການປັບປຸງລະບົບຈໍາໜ່າຍໄຟຟ້າ 22 ກິໂລໂວນ ໄລຍະທາງ 154.9 ວົງຈອນກິໂລແມັດ ຊຶ່ງປະຈຸບັນໄດ້ມີການສໍາຫຼວດແລ້ວ ແລະ ຢູ່ໃນລະຫວ່າງການເຈລະຈາເງື່ອນໄຂເງິນກູ້ໃນວົງເງິນ 1,137 ລ້ານບາດ ເພື່ອນໍາສະເໜີຄະນະລັດຖະມົນຕີໄທ ພິຈາລະນາໃຫ້ການຊ່ວຍເຫຼືອທາງການເງິນຕໍ່ໄປ.

51. ກອງປະຊຸມຮັບຊາບ ຂໍ້ສະເໜີຂອງ ສປປ ລາວ ກ່ຽວກັບບັນຫາໄຟຟ້າໄຫຼຍ້ອນກັບຈາກຈຸດຂາຍໄຟຟ້າລະບົບ ຈໍາໜ່າຍລະຫວ່າງການໄຟຟ້າສ່ວນພູມິພາກ (ກຟພ) ຂອງໄທ ແລະ ລັດວິສາຫະກິດໄຟຟ້າລາວ (ຟຟລ) ແລະ ໃຫ້ໄຟຟ້າລາວ ເຮັດໜັງສືແຈ້ງກະຊວງພະລັງງານຂອງໄທ ໂດຍຜ່ານກະຊວງພະລັງງານ ແລະ ບໍ່ແຮ່ ສປປ ລາວ ເພື່ອພິຈາລະນາເລື່ອງດັ່ງກ່າວຕໍ່ໄປ.

52. ກອງປະຊຸມສະໜັບສະໜູນ ໃຫ້ທັງສອງຝ່າຍປຶກສາຫາລືລາຍລະອຽດຮ່ວມກັນ ກ່ຽວກັບການຈັດຫຼັກສູດຝຶກອົບຮົມ ແລະ ສຳມະນາ ໃນຂະແໜງພະລັງງານ ແລະ ບໍ່ແຮ່.

ການຮ່ວມມືດ້ານການຂົນສົ່ງທາງບົກ

53. ກອງປະຊຸມສະໜັບສະໜູນ ໃຫ້ພາກທຸລະກິດທັງສອງຝ່າຍປຶກສາຫາລືຮ່ວມກັນເພື່ອປັບປຸງຫົວລາກ - ຫາງລາກ ຮ່ວມກັນໃນທຸກໆເສັ້ນທາງ ເຊິ່ງເປັນທາງເລືອກໜຶ່ງ ແລະ ອຳນວຍຄວາມສະດວກໃຫ້ຜູ້ປະກອບການຂົນສົ່ງໄດ້ມີການສົ່ງສິນຄ້າຮ່ວມກັນ.

54. ກອງປະຊຸມເຫັນດີ ສະໜັບສະໜູນການເຊື່ອມໂຍງເສັ້ນທາງ ຊຽງໃໝ່-ນະຄອນຫຼວງວຽງຈັນ ເປັນແລວເສດຖະກິດຕໍ່ໄປ.

55. ກອງປະຊຸມຮັບຊາບ ຕໍ່ຜົນການເຈລະຈາ ສາມຝ່າຍ ລາວ - ໄທ - ຈີນ ໃນວັນທີ 18- 19 ມິຖຸນາ 2014 ທີ່ ປັກກິ່ງ ແລະ ຊຸກຍູ້ໃຫ້ມີການລົງນາມ ບົດບັນທຶກຄວາມເຂົ້າໃຈ ວ່າດ້ວຍການຂົນສົ່ງສາມຝ່າຍ ລາວ - ໄທ - ຈີນ ຢູ່ຈຸດຜ່ານແດນ ຊຽງຂອງ-ຫ້ວຍຊາຍ ແລະ ຈຸດຜ່ານແດນບໍ່ເຕັນ-ບໍ່ຫານຮ່ວມກັນ.

56. ກອງປະຊຸມສະໜັບສະໜູນ ໃຫ້ມີການເພີ່ມເສັ້ນທາງເລກ 8 ແລະ 12 ພາຍໃຕ້ການຕົກລົງ GMS CBTA ຫຼື ສ້າງບົດບັນທຶກຄວາມເຂົ້າໃຈສາມຝ່າຍ ລາວ - ໄທ - ຫວຽດນາມ ຕາມຜົນການປຶກສາຫາລື ລະຫວ່າງນາຍົກລັດຖະມົນຕີລາວ ແລະ ໄທ ໃນກອງປະຊຸມສຸດຍອດ ACMECS ຄັ້ງທີ 5 ໃນລະຫວ່າງວັນທີ 12-13 ມີນາ 2013 ທີ່ ນະຄອນຫຼວງວຽງຈັນ ເຊິ່ງຝ່າຍໄທກຳລັງດຳເນີນການໃຫ້ສັດຕະຍາບັນໝົດທຸກສັນຍາ, ອະນຸສັນຍາ ແລະ ບົດແນບທ້າຍຂອງ GMS CBTA ເພື່ອສາມາດຈັດຕັ້ງປະຕິບັດຕາມສັນຍາດັ່ງກ່າວໃຫ້ເປັນຮູບປະທຳ.

57. ກອງປະຊຸມຮັບຊາບ ຜົນຂອງກອງປະຊຸມປຶກສາຫາລື ກ່ຽວກັບການຂົນສົ່ງທາງບົກ ລະຫວ່າງ ລາວ-ໄທ ໃນລະຫວ່າງວັນທີ 2-3 ກັນຍາ 2014 ທີ່ເມືອງພັດທະຍາ, ຈັງຫວັດຊົນບຸລີ, ເຊິ່ງກອງປະຊຸມໄດ້ມີການຕິດຕາມ ແລະ ຕີລາຄາຜົນຂອງການຈັດຕັ້ງປະຕິບັດການຮ່ວມມືດ້ານການຂົນສົ່ງທາງບົກ ລວມທັງແລກປ່ຽນຄວາມຄິດເຫັນ ແລະ ແກ້ໄຂບັນຫາຕ່າງໆຮ່ວມກັນ.

58. ກອງປະຊຸມສະແດງຄວາມຍິນດີ ທີ່ສອງຝ່າຍໄດ້ຮ່ວມກັນເປີດບໍລິການເສັ້ນທາງລົດໂດຍສານ ລະຫວ່າງປະເທດລາວ-ໄທ ແລະ ຈຳນວນ 12 ເສັ້ນທາງຄື: 1) ນະຄອນຫຼວງວຽງຈັນ-ໜອງຄາຍ, 2) ນະຄອນຫຼວງວຽງຈັນ-ອຸດອນທານີ, 3) ນະຄອນຫຼວງວຽງຈັນ-ຂອນແກ່ນ, 4) ນະຄອນຫຼວງວຽງຈັນ-ໂຄລາດ-ບາງກອກ. 5) ວັງວຽງ-ໜອງຄາຍ -ອຸດອນທານີ, 6) ທ່າແຂກ-ນະຄອນພະນົມ, 7) ສະຫວັນນະເຂດ-ມຸກດາຫານ, 8) ປາກເຊ-ອຸບົນລາຊະທານີ, 9 ) ປາກເຊ-ບາງກອກ, 10) ຫຼວງພະບາງ-ຊຽງໃໝ່, 11) ຫຼວງພະບາງ-ເລີຍ, 12) ຫ້ວຍຊາຍ-ຊຽງຂອງ-ຊຽງຮາຍ.

59. ກອງປະຊຸມສະໜັບສະໜູນໃຫ້ ທັງສອງຝ່າຍສຳຫຼວດຄວາມເປັນໄປໄດ້ໃນການແລ່ນລົດໂດຍສານປະຈຳທາງ ໃນສາຍທາງ ຫຼວງພະບາງ-ໄຊຍະບູລີ-ນ່ານ, ຫຼວງພະບາງ-ອຸດຕະລາດິດ-ພິສະນຸໂລກ.

ການຮ່ວມມືດ້ານການຂົນສົ່ງທາງລົດໄຟ

60. ກອງປະຊຸມຮັບຊາບ ການຮ່ວມມືລະຫວ່າງກົມທາງລົດໄຟ ແລະ ການລົດໄຟແຫ່ງປະເທດໄທ ເຊິ່ງມີການປຶກສາຫາລືກັນຢ່າງຕໍ່ເນື່ອງ ແລະ ການລົດໄຟແຫ່ງປະເທດໄທ ໄດ້ໃຫ້ການຊ່ວຍເຫຼືອດ້ານເຕັກນິກ, ດ້ານ

ວິຊາການ, ອຸປະກອນການສື່ສານ, ໂທລະຄົມມະນາຄົມ, ຈັດຝຶກອົບຮົມ ແລະ ທັດສະນະສຶກສາ. ພ້ອມກັນນີ້, ຝ່າຍໄທຍິນດີ ສືບຕໍ່ໃຫ້ການສະໜັບສະໜູນໃນການກໍ່ສ້າງບຸກຄະລາກອນຂັບລົດໄຟ ໃຫ້ແກ່ກົມທາງລົດໄຟລາວ ຫຼາຍຂຶ້ນ.

61. ກອງປະຊຸມສະໜັບສະໜູນໃຫ້ ກົມທາງລົດໄຟ ແຫ່ງ ສປປ ລາວ ແລະ ການລົດໄຟ ແຫ່ງ ປະເທດໄທ ຮ່ວມກັນຈັດຕັ້ງຜັນຂະຫຍາຍ ຜົນການຢັ້ງຢາມຂອງຜູ້ວ່າການລົດໄຟ ແຫ່ງ ປະເທດໄທ ໃນວັນທີ 18 ມີນາ 2013.

<u>ການຮ່ວມມືດ້ານການຂົນສົ່ງທາງນ້ຳ</u>

62. ກອງປະຊຸມສະໜັບສະໜູນ ໃຫ້ໜ່ວຍງານທີ່ກ່ຽວຂ້ອງທັງສອງຝ່າຍສືບຕໍ່ປຶກສາຫາລືຮ່ວມກັນ ກ່ຽວກັບການຮ່ວມມືຄຸ້ມຄອງການຂົນສົ່ງທາງເຮືອຂ້າມຟາກຕາມແມ່ນ້ຳຂອງ ເພື່ອຄວາມເປັນເອກະພາບໃນການເກັບຄ່າທຳນຽມ ແລະ ອື່ນໆ.

<u>ການຮ່ວມມືດ້ານການບິນ</u>

63. ກອງປະຊຸມຮັບຊາບວ່າ ກະຊວງຄົມມະນາຄົມ ແຫ່ງ ຣາຊະອານາຈັກໄທ (ບໍລິສັດທ່າອາກາດສະຍານໄທ ຈຳກັດ ມະຫາຊົນ) ເຫັນດີໃນການຊ່ວຍເຫຼືອກໍ່ສ້າງບຸກຄະລາກອນໃນການຄຸ້ມຄອງສະໜາມບິນ, ດັບເພີງ ແລະ ອື່ນໆ.

<u>ການຮ່ວມມືດ້ານການພັດທະນາພື້ນຖານໂຄງລ່າງ</u>

ກອງປະຊຸມຮັບຊາບ ຄວາມຄືບໜ້າ ແລະ ການປຶກສາຫາລືກ່ຽວກັບແນວທາງການພັດທະນາເຄືອຂ່າຍຄົມມະນາຄົມເຊື່ອມໂຍງ ລາວ-ໄທ, ເຊິ່ງປະກອບດ້ວຍໂຄງການພັດທະນາເສັ້ນທາງ, ທາງລົດໄຟ, ຂົວຂ້າມແມ່ນ້ຳຂອງ ແລະ ການພັດທະນາສະໜາມບິນ, ເຊິ່ງທັງສອງຝ່າຍເຫັນດີຈະຈັດບູລິມະສິດ ຂອງໂຄງການພັດທະນາໂຄງລ່າງພື້ນຖານຮ່ວມກັນ ດັ່ງນີ້:

<u>ໂຄງການກໍ່ສ້າງເສັ້ນທາງ</u>

64. ກອງປະຊຸມສະແດງຄວາມຍິນດີ ຕໍ່ການກໍ່ສ້າງ ໂຄງການປັບປຸງຖະໜົນແຕ່ ສາມແຍກເມືອງປາກລາຍ - ດ່ານພູດູ່, ແຂວງໄຊຍະບູລີ ໄລຍະທາງ 30 ກມ, ເຊິ່ງໄດ້ກໍ່ສ້າງສຳເລັດ ແລະ ມອບຮັບໂຄງການ ໃນວັນທີ 26 ມິຖຸນາ 2014.

65. ກອງປະຊຸມສະແດງຄວາມຍິນດີ ຕໍ່ການກໍ່ສ້າງ ໂຄງການປັບປຸງຖະໜົນເລກ 11 ແຕ່ເມືອງສີໂຄດຕະບອງ - ບ້ານນ້ຳສັງ, ເມືອງສັງທອງ, ນະຄອນຫຼວງວຽງຈັນ ໄລຍະທາງ 83 ກມ, ເຊິ່ງໄດ້ກໍ່ສ້າງສຳເລັດ ແລະ ມອບຮັບໂຄງການ ໃນວັນທີ 15 ສິງຫາ 2014.

66. ກອງປະຊຸມຮັບຊາບວ່າ ສພພ (NEDA) ໄດ້ອະນຸມັດເງິນກູ້ຢືມຕາມສັດສ່ວນ 80% - 20% ໃນມູນຄ່າ 1,390 ລ້ານບາດ ໃຫ້ແກ່ ສປປ ລາວ ໃນໂຄງການກໍ່ສ້າງທາງ ແຕ່ບ້ານຮວກ, ອຳເພີພູຊາງ, ຈັງຫວັດພະເຢົາ - ເມືອງຄອບ - ເມືອງຊຽງຮ່ອນ ແຂວງໄຊຍະບູລີ ແລະ ແຕ່ເມືອງຄອບ - ບ້ານປາກຄອບ,

ແຂວງໄຊຍະບຸລີ - ບ້ານກ້ອນຕື້ນ, ແຂວງບໍ່ແກ້ວ ໄລຍະທາງ 111 ກມ, ໂຄງການດັ່ງກ່າວໄດ້ເລີ່ມຕົ້ນກໍ່ສ້າງ ແຕ່ເດືອນພຶດສະພາ 2014 ແລະ ຄາດວ່າຈະສຳເລັດໃນ ທ້າຍເດືອນພະຈິກ 2017.

67. ກອງປະຊຸມຮັບຊາບວ່າ ສອງຝ່າຍໄດ້ເຊັນສັນຍາກູ້ຢືມເງິນ ຈຳນວນ 1,977 ລ້ານບາດ ໃນໂຄງການປັບປຸງຍົກລະດັບກໍ່ສ້າງທາງແຕ່ບ້ານນາປົງ, ເມືອງທົ່ງສາ - ບ້ານຊຽງແມນ ເມືອງຈອມເພັດ, ແຂວງຫຼວງພະບາງ ໄລຍະທາງປະມານ 113.95 ກມ ໃນວັນທີ 26 ພະຈິກ 2014 ແລະ ປະຈຸບັນຢູ່ໃນຂັ້ນຕອນການປະມູນຈັດຊື້ຈັດຈ້າງ ບໍລິສັດທີ່ປຶກສາ ແລະ ບໍລິສັດຮັບເໝົາກໍ່ສ້າງ.

68. ກອງປະຊຸມສະໜັບສະໜູນ ໃຫ້ພາກສ່ວນທີ່ກ່ຽວຂ້ອງທັງສອງຝ່າຍສຶກສາຄວາມອາດສາມາດໃນການກໍ່ສ້າງ ເສັ້ນທາງແຕ່ ບ້ານກ້ອນຕື້ນ, ເມືອງປາກທາ - ຫ້ວຍຊາຍ, ເພື່ອເຊື່ອມຕໍ່ກັບເສັ້ນທາງເລກ 3, ເຊິ່ງມີຄວາມຍາວ 74 ກິໂລແມັດ ແລະ ເສັ້ນທາງແຕ່ເມືອງປາກທາ - ຜາອຸດົມ, ແຂວງບໍ່ແກ້ວ - ປາກແບ່ງ, ແຂວງອຸດົມໄຊ ເພື່ອເຊື່ອມຕໍ່ກັບເສັ້ນທາງຫ້ວຍໂກນ (ໄທ) - ເມືອງເງິນ, ແຂວງໄຊຍະບູລີ - ປາກແບ່ງ, ແຂວງອຸດົມໄຊ ເຊິ່ງມີຄວາມຍາວ 100 ກິໂລແມັດ ຕາມການປຶກສາຫາລືລະຫວ່າງ ພະນະທ່ານ ທອງສິງ ທຳມະວົງ, ນາຍົກລັດຖະມົນຕີ ແຫ່ງ ສປປ ລາວ ແລະ ພະນະທ່ານ ພົນເອກ ປຣະຍຸດ ຈັນໂອຊາ, ນາຍົກລັດຖະມົນຕີ ແຫ່ງ ຣາຊະອານາຈັກໄທ ໃນວັນທີ 26 ພະຈິກ 2014 ໃນໂອກາດຢ້ຽມຢາມ ສປປ ລາວ ຢ່າງເປັນທາງການ.

69. ກອງປະຊຸມຮັບຊາບວ່າ ຝ່າຍລາວສະເໜີໃຫ້ຝ່າຍໄທພິຈາລະນາໃຫ້ການສະໜັບສະໜູນ ໂຄງການປັບປຸງລະບົບພື້ນຖານໂຄງລ່າງ ພາຍໃນນະຄອນຫຼວງວຽງຈັນ, ເຊິ່ງມີໄລຍະຂອງໂຄງການ 1,2,4,5 ໃນຈຳນວນ 31 ເສັ້ນທາງ, ມີຄວາມຍາວ 72 ກິໂລແມັດ ແລະ ໂຄງການກໍ່ສ້າງໄລຍະ 3 (ກໍ່ສ້າງຮ່ອງລະບາຍນ້ຳ ເຂດບ້ານນາແຮ່ - ສະໜາມບິນວັດໄຕ - ບ້ານດົງນາທອງ - ບ້ານດອນແດງ ຊ່ວງທີ 1 ຍາວ 5,100 ແມັດ ). ເພື່ອເປັນການກະກຽມການເປັນປະທານອາຊຽນ ແລະ ສະເຫຼີມສະຫຼອງວັນສະຖາປະນາ ສປປ ລາວ ຄົບຮອບ 40 ປີ.

70. ກອງປະຊຸມສະແດງຄວາມຍິນດີ ທີ່ ສພພ (NEDA) ສະໜັບສະໜູນການຊ່ວຍເຫຼືອ ໃນໂຄງການສຳຫຼວດ ແລະ ອອກແບບເສັ້ນທາງ ແຕ່ສົ້ນຂົວຄົກເຂົ້າດໍ - ບ້ານນາສັກ - ບ້ານວັງ, ແຂວງວຽງຈັນ - ຂົວນ້ຳສັງ, ນະຄອນຫຼວງວຽງຈັນ ໄລຍະທາງປະມານ 156 ກິໂລແມັດ. ໂຄງການດັ່ງກ່າວແມ່ນໄດ້ເລີ່ມການສຳຫຼວດ ແລະ ອອກແບບເສັ້ນທາງ, ຄາດວ່າຈະສຳເລັດໃນເດືອນກໍລະກົດ 2015.

71. ກອງປະຊຸມເຫັນດີ ໃຫ້ມີການແລກປ່ຽນປະສົບການໃນການຄຸ້ມຄອງເສັ້ນທາງ ແລະ ການຄຸ້ມຄອງເສັ້ນທາງໃນຮູບແບບສະໄໝໃໝ່ ແລະ ການສ້າງຕັ້ງໜ່ວຍງານຄຸ້ມຄອງເສັ້ນທາງທີ່ເໝາະສົມ.

<u>ໂຄງການກໍ່ສ້າງທາງລົດໄຟ</u>

72. ກອງປະຊຸມສະແດງຄວາມຍິນດີ ຕໍ່ຄວາມຄືບໜ້າຂອງໂຄງການກໍ່ສ້າງທາງລົດໄຟຈາກສະຖານີທ່ານາແລ້ງ - ສະຖານີວຽງຈັນ (ໄລຍະ 2) ພາຍໃຕ້ເງິນກູ້ຢືມຕາມສັດສ່ວນ 70% / 30% ຈຳນວນ 1,650 ລ້ານບາດ ເພື່ອສ້າງສະຖານີເປັນສາງຕູ້ຄອນເທັນເນີສິນຄ້າ (Container Yard), ຍົກລະດັບສະຖານີທ່ານາແລ້ງ,ການສ້າງຫ້ອງການຂອງສະຖານີ ແລະ ອາຄານພັກເຊົາ ຄາດວ່າຈະສຳເລັດໃນເດືອນກໍລະກົດ

2015 ແລະ ຂໍໃຫ້ຝ່າຍລາວແຈ້ງແຜນການດໍາເນີນງານໃນສ່ວນຂອງລະບົບລາງ ແລະ ສະຖານີວຽງຈັນ ໃນໄລຍະຕໍ່ໄປ.

ໂຄງການກໍ່ສ້າງຂົວຂ້າມນໍ້າຂອງ.

73. ກອງປະຊຸມສະແດງຄວາມຍິນດີ ຕໍ່ຜົນສໍາເລັດໃນການກໍ່ສ້າງ ຂົວມິດຕະພາບ 4 (ຫ້ວຍຊາຍ - ຊຽງຂອງ) ເຊິ່ງໄດ້ມີການເປີດນໍາໃຊ້ ໃນວັນທີ 11 ທັນວາ 2013, ໂດຍການໃຫ້ກຽດເປັນປະທານຮ່ວມພິທີເປີດ ຂອງ ພະນະທ່ານ ບຸນຍັງ ວໍລະຈິດ, ຮອງປະທານປະເທດ ແຫ່ງ ສປປ ລາວ ແລະ ສົມເດັດພະເທບ ພະຣັດຣາຊະສຸດາ ສະຍາມບໍລົມຣາຊະກຸມາຣີ.

74. ກອງປະຊຸມຮັບຊາບ ຜົນການສໍາຫຼວດ - ອອກແບບຂອງໂຄງການຂົວມິດຕະພາບ 5 (ປາກຊັນ - ບຶງການ) ແລະ ສະໜັບສະໜູນໃຫ້ພາກສ່ວນທີ່ກ່ຽວຂ້ອງທັງສອງຝ່າຍສືບຕໍ່ປຶກສາຫາລືໃນການກໍ່ສ້າງຂົວດັ່ງກ່າວ ໂດຍໄວ ຕາມການເຫັນດີລະຫວ່າງ ພະນະທ່ານ ທອງສິງ ທໍາມະວົງ, ນາຍົກລັດຖະມົນຕີ ແຫ່ງ ສປປ ລາວ ແລະ ພະນະທ່ານ ພົນເອກ ປຣະຍຸດ ຈັນໂອຊາ, ນາຍົກລັດຖະມົນຕີ ແຫ່ງ ຣາຊະອານາຈັກໄທ ໃນ ວັນທີ 26 ພະຈິກ 2014.

75. ກອງປະຊຸມເຫັນດີ ໃຫ້ຊຸກຍູ້ ໂຄງການກໍ່ສ້າງຂົວຂ້າມນໍ້າຂອງສໍາລັບລົດໄຟ ທ່ານາແລ້ງ - ໜອງຄາຍ ຕາມທີ່ໄດ້ມີການປຶກສາຫາລືຮ່ວມກັນຂອງສອງນາຍົກລັດຖະມົນຕີ ໃນວັນທີ 26 ພະຈິກ 2014 ແລະ ສະເໜີໂຄງການດັ່ງກ່າວເຂົ້າຢູ່ໃນໂຄງການ ການຮ່ວມມືລົດໄຟ ລາວ-ຈີນ, ລາວ-ໄທ ແລະ ໄທ-ຈີນ.

76. ກອງປະຊຸມເຫັນດີ ໃຫ້ພາກສ່ວນທີ່ກ່ຽວຂ້ອງທັງສອງຝ່າຍເລັ່ງລັດປະສານງານ ຕາມຜົນການປຶກສາຫາລື ຮ່ວມກັນຂອງສອງນາຍົກລັດຖະມົນຕີ ໃນວັນທີ 26 ພະຈິກ 2014. ເຊິ່ງຝ່າຍໄທມີຄວາມພ້ອມ ພິຈາລະນາແນວທາງການຮ່ວມມືເພື່ອກໍ່ສ້າງ ຂົວມິດຕະພາບ 6 (ສາລະວັນ-ອຸບົນຣາຊະທານີ).

ໂຄງການພັດທະນາສະໜາມບິນ

77. ກອງປະຊຸມສະແດງຄວາມຍິນດີ ຕໍ່ຜົນສໍາເລັດໃນການກໍ່ສ້າງໂຄງການພັດທະນາສະໜາມບິນປາກເຊ, ແຂວງຈໍາປາສັກ ໄລຍະທີ II ໃນເດືອນພະຈິກ 2014.

78. ກອງປະຊຸມສະໜັບສະໜູນໃຫ້ ພາກສ່ວນທີ່ກ່ຽວຂ້ອງທັງສອງຝ່າຍປຶກສາຫາລືລາຍລະອຽດຮ່ວມກັນໃນ ການພັດທະນາສະໜາມບິນແຂວງສະຫວັນນະເຂດ ຕາມການປຶກສາຫາລື ລະຫວ່າງສອງນາຍົກລັດຖະມົນຕີ ໃນວັນທີ 26 ພະຈິກ 2014 ໃນໂອກາດຢ້ຽມຢາມ ສປປ ລາວ ຢ່າງເປັນທາງການ ຂອງພະນະທ່ານ ນາຍົກລັດຖະມົນຕີ ພົນເອກ ປຣະຍຸດ ຈັນໂອຊາ.

ໂຄງການພັດທະນາຕົວເມືອງ ແລະ ນໍ້າປະປາ

79. ກອງປະຊຸມສະແດງຄວາມຍິນດີ ຕໍ່ຜົນສໍາເລັດການສຶກສາສໍາຫຼວດ ແລະ ອອກແບບລະບົບນໍ້າປະປາ 13 ແຫ່ງ ແລະ ການພັດທະນາຕົວເມືອງ 12 ເມືອງ, ເຊິ່ງໄດ້ມີການຈັດຕັ້ງປະຕິບັດກໍ່ສ້າງລະບົບນໍ້າປະປາ ຈໍານວນ 5 ແຫ່ງ ໃນ 5 ຕົວເມືອງຄື: ເມືອງແບ່ງ, ແຂວງອຸດົມໄຊ; ເມືອງຄອບ, ແຂວງໄຊຍະບູລີ; ເມືອງ

ພະລານໄຊ, ແຂວງສະຫວັນນະເຂດ; ເມືອງຫ້ວຍຊາຍ, ແຂວງບໍ່ແກ້ວ ແລະ ເມືອງໂຂງ, ແຂວງຈຳປາສັກ. ສ່ວນການສຳຫຼວດ ແລະ ອອກແບບລະບົບນ້ຳປະປາ ຈຳນວນ 8 ແຫ່ງທີ່ຍັງເຫຼືອ ແລະ ການພັດທະນາຕົວເມືອງ 12 ເມືອງ ສະເໜີໃຫ້ມີການພິຈາລະນາເພື່ອດຳເນີນໂຄງການຕໍ່ໄປ.

<u>ການຮ່ວມມືດ້ານໄປສະນີ ແລະ ໂທລະຄົມມະນາຄົມ</u>

80. ກອງປະຊຸມສະແດງຄວາມຍິນດີ ຕໍ່ຜົນສຳເລັດຂອງການຢ້ຽມຢາມ ສປປ ລາວ ຂອງພະນະທ່ານ ນາວາອາກາດເອກ ອະນຸດິດ ນະຄອນທັບ, ລັດຖະມົນຕີວ່າການ ກະຊວງໄອຊີທີ ແຫ່ງ ຣາຊະອານາຈັກໄທ ຕາມການເຊີນຂອງ ກະຊວງໄປສະນີໂທລະຄົມມະນາຄົມ ແລະ ການສື່ສານ ແຫ່ງ ສປປ ລາວ ໃນລະຫວ່າງວັນທີ 14 - 16 ມີນາ 2013 ໂດຍທັງສອງຝ່າຍເຫັນດີຮ່ວມມືກັນດ້ານໄປສະນີ, ໄອຊີທີ ແລະ ການແກ້ໄຂບັນຫາຄື້ນຄວາມຖີ່ລົບກວນຕາມບໍລິເວນຊາຍແດນໂດຍໄວ. ນອກຈາກນີ້ ຍັງເຫັນດີ ທີ່ຈະຈັດກອງປະຊຸມພົບປະປະຈຳປີ ເພື່ອແລກປ່ຽນຂໍ້ມູນຂ່າວສານ ແລະ ປະສົບການໃນການຄຸ້ມຄອງດັດສົມດ້ານໂທລະຄົມມະນາຄົມໄອຊີທີ, ການຮັກສາຄວາມປອດໄພດ້ານຂໍ້ມູນຂ່າວສານ ແລະ ການບໍລິຫານຈັດການ ແລະ ການບໍລິການດາວທຽມ, ລວມທັງການສົ່ງເສີມການຮ່ວມມືດ້ານວິຊາການລະດັບຕ່າງໆ ລະຫວ່າງພາກລັດ ແລະ ພາກເອກະຊົນ.

81. ກອງປະຊຸມຮັບຊາບວ່າ ບໍລິສັດ ທີໂອທີ ຈຳກັດ (ມະຫາຊົນ) ຂອງໄທ ມີຄວາມພ້ອມໃນການດຳເນີນເຄືອຂ່າຍ fiber optic ລະຫວ່າງ ລາວ-ໄທ-ຈີນ ຕາມເສັ້ນທາງເລກ 13 ໃນ ສປປ ລາວ ເພື່ອການຕິດຕໍ່ລະ ຫວ່າງ 3 ປະເທດ, ເຊິ່ງຝ່າຍລາວຈະພິຈາລະນາຮູບແບບການເຊື່ອມຕໍ່ເຄືອຂ່າຍດັ່ງກ່າວໃຫ້ເປັນຮູບປະທຳຕໍ່ໄປ.

82. ກອງປະຊຸມຮັບຊາບ ຜົນຂອງກອງປະຊຸມ ຄະນະກຳມະການສະເພາະກິດດ້ານການບໍລິການ ໂທລະສັບເຄື່ອນທີ່ລຽບຕາມຊາຍແດນ ຄັ້ງທີ 4 ໃນລະຫວ່າງວັນທີ 26 - 27 ມິຖຸນາ 2014 ທີ່ ນະຄອນຫຼວງວຽງຈັນ ແລະ ກອງປະຊຸມປະສານງານຄື້ນຄວາມຖີ່ລຽບຕາມຊາຍແດນລາວ-ໄທ (JTC) ຄັ້ງທີ 5 ໃນລະຫວ່າງວັນທີ 20 - 22 ຕຸລາ 2014 ທີ່ ນະຄອນພະນົມ ກ່ຽວກັບບັນຫາສັນຍານລົບກວນລະຫວ່າງ ETL ແລະ DTAC ໃຫ້ແຕ່ງຕັ້ງຄະນະອະນຸກຳມະການແກ້ໄຂບັນຫາສະເພາະ 4 ຝ່າຍ ເພື່ອແກ້ໄຂບັນຫາດັ່ງກ່າວ ໂດຍປະກອບມີ: ກະຊວງໄປສະນີ ໂທລະຄົມມະນາຄົມ ແລະ ການສື່ສານ ສປປ ລາວ, NBCT ໄທ, ETL ແລະ DTAC ໃຫ້ເປັນຮູບປະທຳໂດຍໄວ.

83. ກອງປະຊຸມຮັບຊາບ ຝ່າຍລາວຍິນດີເປັນເຈົ້າພາບຈັດກອງປະຊຸມປະສານງານຄື້ນຄວາມຖີ່ລຽບຕາມຊາຍແດນລາວ-ໄທ ຄັ້ງທີ 6.

84. ກອງປະຊຸມສະແດງຄວາມຍິນດີ ກ່ຽວກັບການແກ້ໄຂສັນຍານລົບກວນ ລະຫວ່າງ LTC, ກະຊວງປ້ອງກັນຄວາມສະຫງົບ ແລະ ບໍລິສັດ ກສທ, ໂທລະຄົມມະນາຄົມ ຈຳກັດ (ມະຫາຊົນ), ເຊິ່ງກະຊວງປ້ອງກັນຄວາມສະຫງົບໄດ້ຫຼຸດຄວາມແຮງສັນຍານ 3 ສະຖານນີ ໃນເດືອນ ສິງຫາ 2014.

85. ກອງປະຊຸມສະແດງຄວາມຍິນດີ ທີ່ໜ່ວຍງານ Lao CERT ແລະ Thai CERT ໄດ້ມີການປະສານງານ ແລະ ຮ່ວມມືໃນການແລກປ່ຽນບົດຮຽນ, ຊ່ຽວຊານ ແລະ ການຝຶກອົບຮົມ ຕາມບົດບັນທຶກຄວາມຄວາມເຂົ້າໃຈ.



ᨶ

ዓNA

86. ກອງປະຊຸມເຫັນດີ ໃຫ້ໜ່ວຍງານທີ່ກ່ຽວຂ້ອງທັງສອງຝ່າຍມີການເຊື່ອມຕໍ່ລະບົບໂທລະຄົມມະນາຄົມ ແລະ ລະບົບອິນເຕີເນັດຜ່ານສູນອິນເຕີເນັດແຫ່ງຊາດ (LANIC), ກະຊວງໄປສະນີໂທລະຄົມມະນາຄົມ ແລະ ການສື່ສານປະເທດລາວ ກັບ ບໍລິສັດຜູ້ສະໜອງການບໍລິການໂທລະຄົມມະນາຄົມຂອງໄທ ເຊັ່ນ: ບໍລິສັດ ກສທ, ໂທລະຄົມມະນາຄົມ ຈຳກັດ (ມະຫາຊົນ) , ບໍລິສັດ ທີໂອທີ ຈຳກັດ ມະຫາຊົນ, True, AIS, DTAC ແລະ UIH, ພ້ອມທັງການເຊື່ອມຕໍ່ລະບົບອິນເຕີເນັດ Exchange (IX) ຂອງປະເທດໄທ ເຂົ້າກັບລະບົບ National Internet Exchange (NIX) ຂອງສູນອິນເຕີເນັດແຫ່ງຊາດ.

ການຮ່ວມມືດ້ານການລົງທຶນ

87. ກອງປະຊຸມຮັບຊາບວ່າ ການລົງທຶນຂອງໄທໃນ ສປປ ລາວ ແຕ່ປີ 1988-2014 ມີຈຳນວນ 665 ໂຄງການມູນຄ່າການລົງທຶນປະມານ 4,4 ຕື້ໂດລາສະຫະລັດ ແລະ ສະເພາະໃນປີ 2013-2014 ມີການລົງທຶນເພີ່ມຂຶ້ນຈຳນວນ 7 ໂຄງການ, ມູນຄ່າປະມານ 600 ລ້ານ ໂດລາສະຫະລັດ, ເຊິ່ງເປັນອັນດັບ 2 ຮອງຈາກຈີນ ຂອງບັນດາປະເທດທີ່ມາລົງທຶນໃນ ສປປ ລາວ. ທັງສອງຝ່າຍຈະຮ່ວມມືກັນໃນການສະໜັບສະໜູນ, ສົ່ງເສີມການລົງທຶນຂອງໄທ ໃນ ສປປ ລາວ ໃຫ້ເພີ່ມຂຶ້ນ.

88. ກອງປະຊຸມຮັບຊາບ ຄວາມຄືບໜ້າການສ້າງຕັ້ງເຂດພັດທະນາເສດຖະກິດພິເສດຂອງໄທ ຢູ່ຈັງຫວັດມຸກດາຫານ ແລະ ຈັງຫວັດໜອງຄາຍ ແລະ ສະໜັບສະໜູນໃຫ້ໜ່ວຍງານທີ່ກ່ຽວຂ້ອງທັງສອງຝ່າຍປຶກສາຫາລືລາຍລະອຽດຮ່ວມກັນໃນການຮ່ວມມື ແລະ ສົ່ງເສີມການລົງທຶນ ລະຫວ່າງກັນ ທີ່ຈະນຳໄປສູ່ການພັດທະນາ ກຸ່ມກິດຈະກຳທາງເສດຖະກິດ ຫຼື ການເຊື່ອມໂຍງຮ່ວງໂສ້ການຜະລິດລະຫວ່າງສອງປະເທດ.

ການຮ່ວມມືດ້ານການສົ່ງເສີມ ແລະ ພັດທະນາ SMEs

89. ກອງປະຊຸມສະໜັບສະໜູນ ໃຫ້ມີການຮ່ວມມືດ້ານການສົ່ງເສີມ ແລະ ການພັດທະນາ SMEs ລະຫວ່າງ ສປປ ລາວ ແລະ ຣາຊະອານາຈັກໄທ ພາຍໃຕ້ຂອບບົດບັນທຶກຄວາມເຂົ້າໃຈລະຫວ່າງ ຫ້ອງການສົ່ງເສີມ ແລະ ພັດທະນາວິສາຫະກິດຂະໜາດນ້ອຍ ແລະ ກາງ (ຫກວ) ສປປ ລາວ ກັບ ສຳນັກງານສົ່ງເສີມວິສາຫະກິດຂະໜາດກາງ ແລະ ນ້ອຍ (ສສວ), ຣາຊະອານາຈັກໄທ ທີ່ໄດ້ລົງນາມ ໃນວັນທີ 25 ກັນຍາ 2008 ເພື່ອຈັດຕັ້ງ Lao-Thai Working Group on SME Cooperation ລວມທັງແຜນງານລວມ ແລະ ການດຳເນີນໂຄງການຕົວຢ່າງຮ່ວມກັນ, ເຊິ່ງຝ່າຍໄທໂດຍແມ່ນກະຊວງອຸດສາຫະກຳ ຍິນດີທີ່ຈະໃຫ້ການຮ່ວມມືໃນກິດຈະການ ການດຳເນີນໂຄງການຕໍ່ໄປ.

ການຮ່ວມມືດ້ານການຄ້າ

90. ກອງປະຊຸມຮັບຊາບວ່າ ໃນປີ 2013 ມູນຄ່າການຄ້າສອງຝ່າຍລະຫວ່າງ ສປປ ລາວ ແລະ ຣາຊະອານາຈັກໄທ ບັນລຸໄດ້ ປະມານ 5 ຕື້ໂດລາສະຫະລັດ ທຽບໃສ່ປີ 2012 ເພີ່ມຂຶ້ນ 4,51 % ແລະ ປີ



ɑɴ^

2014 (9 ເດືອນ) ບັນລຸໄດ້ 4 ຕື້ໂດລາສະຫະລັດ ທຽບໃສ່ປີ 2013 ເພີ່ມຂຶ້ນ 4,97 %. ການສົ່ງອອກຂອງລາວໄປໄທໃນປີ 2013 ມູນຄ່າປະມານ 1,4 ຕື້ໂດລາສະຫະລັດ ແລະ ໃນປີ 2014 ມູນຄ່າ 1 ຕື້ໂດລາສະຫາລັດ ແລະ ການນໍາເຂົ້າຂອງລາວຈາກໄທໃນປີ 2013 ມູນຄ່າປະມານ 4 ຕື້ໂດລາສະຫາລັດ ແລະ ໃນປີ 2014 ມີມູນຄ່າປະມານ 3 ຕື້ໂດລາສະຫາລັດ. ພ້ອມກັນນີ້ ກອງປະຊຸມສະໜັບສະໜູນໃຫ້ກະຊວງອຸດສາຫະກໍາ ແລະ ການຄ້າ ແຫ່ງ ສປປ ລາວ ແລະ ກະຊວງພານິດ ແຫ່ງ ຣາຊະອານາຈັກໄທ ຮ່ວມກັນປຶກສາຫາລືແນວທາງໃນການເພີ່ມມູນຄ່າການຄ້າ ແລະ ການລົງທຶນລະຫວ່າງກັນໃຫ້ຫຼາຍຂຶ້ນ.

91. ກອງປະຊຸມສະແດງຄວາມຍິນດີ ຕໍ່ຜົນສໍາເລັດກອງປະຊຸມແຜນການຮ່ວມມື ລະຫວ່າງ ກະຊວງອຸດສະຫະກໍາ ແລະ ການຄ້າ ແຫ່ງ ສປປ ລາວ ແລະ ກະຊວງພານິດ ແຫ່ງ ຣາຊະອານາຈັກໄທ ຄັ້ງທີ 5 ໃນລະຫວ່າງວັນທີ 8 - 9 ສິງຫາ 2013 ທີ່ ນະຄອນຫຼວງວຽງຈັນ ແລະ ຝ່າຍໄທເຫັນດີເປັນເຈົ້າພາບຈັດກອງປະຊຸມຄັ້ງທີ 6 ໃນປີ 2015.

92. ກອງປະຊຸມສະແດງຄວາມຍິນດີ ຕໍ່ຜົນສໍາເລັດກອງປະຊຸມແຜນການຮ່ວມມື ລະຫວ່າງ ພະແນກອຸດສາຫະກໍາ ແລະ ການຄ້າແຂວງ ກັບສໍານັກງານພານິດຈັງຫວັດຊາຍແດນ ລາວ-ໄທ ຄັ້ງທີ 6 ໃນລະຫວ່າງວັນທີ 25-26 ມີນາ 2014 ທີ່ ແຂວງຈໍາປາສັກ, ເຊິ່ງໄດ້ປຶກສາຫາລືຮ່ວມກັນ ກ່ຽວກັບການສົ່ງເສີມ ແລະ ອໍານວຍຄວາມສະດວກດ້ານການຄ້າ ແລະ ການລົງທຶນ, ການຮ່ວມມືໃນການຂົນສົ່ງ ແລະ ບໍລິການ, ການຮ່ວມມືດ້ານກະສິກໍາ ແລະ ກົນໄກການປະສານງານ ໂດຍມອບໝາຍໃຫ້ພະແນກອຸດສາຫະກໍາ ແລະ ການຄ້າແຂວງ ແລະ ສໍານັກງານພານິດຈັງຫວັດຊາຍແດນ ລາວ-ໄທ ຈັດຕັ້ງປະຕິບັດ ແລະ ຜັນຂະຫຍາຍໝາກຜົນຂອງກອງປະຊຸມດັ່ງກ່າວ ໃຫ້ເກີດເປັນຮູບປະທໍາ.

93. ກອງປະຊຸມເຫັນດີ ໃຫ້ສອງຝ່າຍສືບຕໍ່ຮ່ວມມືເຊິ່ງກັນແລະກັນ ໃນການຈັດງານວາງສະແດງສິນຄ້າ ແລະ ການຈັດພົບປະປຶກສາຫາລືຈັບຄູ່ທຸລະກິດ ທັງຢູ່ໃນ ສປປ ລາວ ແລະ ຣາຊະອານາຈັກໄທ, ເຊິ່ງຖືວ່າເປັນສ່ວນໜຶ່ງທີ່ສໍາຄັນໃນການສົ່ງເສີມການຄ້າລະຫວ່າງສອງປະເທດ ແລະ ສະໜັບສະໜູນໃຫ້ພາກສ່ວນກ່ຽວຂ້ອງທັງສອງຝ່າຍ ເພີ່ມທະວີການຮ່ວມມືກັນໃນດ້ານນີ້ໃຫ້ຫຼາຍຂຶ້ນ ທັງໃນຂອບທະວິພາຄີ ແລະ ພະຫຸພາຄີ.

94. ກອງປະຊຸມຮັບຊາບ ການຮ່ວມມືດ້ານວິຊາການໃນການຝຶກອົບຮົມ, ສໍາມະນາ ແລະ ທັດສະນະສຶກສາພາຍໃຕ້ຫົວຂໍ້ຕ່າງໆ ໃນປີ 2013 ແລະ 2014, ເຊິ່ງເປັນປັດໃຈໜຶ່ງທີ່ສໍາຄັນ ໃນການຊ່ວຍພັດທະນາຊັບພະຍາ ກອນມະນຸດທັງພາກລັດ ແລະ ພາກເອກະຊົນຂອງ ສປປ ລາວ ເພື່ອກຽມຄວາມພ້ອມໄປສູ່ການເປັນປະຊາຄົມເສດຖະກິດອາຊຽນ (AEC) ໃນປີ 2015, ລວມທັງການປະຕິບັດພັນທະຂອງ ສປປ ລາວ ພາຍໃຕ້ຂອບອົງການການຄ້າໂລກ, ເຊິ່ງຝ່າຍໄທຍິນດີສືບຕໍ່ໃຫ້ການຮ່ວມມືທາງດ້ານວິຊາການດ້ານຕ່າງໆ ແກ່ ສປປ ລາວ.

<u>ການຮ່ວມມືທາງດ້ານຊັບສິນທາງປັນຍາ</u>

95. ກອງປະຊຸມສະໜັບສະໜູນ ໃຫ້ໜ່ວຍງານທີ່ກ່ຽວຂ້ອງທັງສອງຝ່າຍສືບຕໍ່ປຶກສາຫາລືຮ່ວມກັນ ໃນການເຮັດບົດບັນທຶກຄວາມເຂົ້າໃຈ ວ່າດ້ວຍການຮ່ວມມືທາງດ້ານຊັບສິນທາງປັນຍາ ລະຫວ່າງ ກົມຊັບສິນ

ທາງປັນຍາ, ກະຊວງວິທະຍາສາດ ແລະ ເຕັກໂນໂລຊີ ແຫ່ງ ສປປ ລາວ ແລະ ກົມຊັບສິນທາງປັນຍາ, ກະຊວງພານິດ ແຫ່ງ ຣາຊະອານາຈັກໄທ.

ການຮ່ວມມືດ້ານພາສີ

96. ກອງປະຊຸມຮັບຊາບວ່າ ກົມພາສີ, ກະຊວງການເງິນ ແຫ່ງ ສປປ ລາວ ແລະ ກົມສຸລະກາກອນ ແຫ່ງ ຣາຊະອານາຈັກໄທ ໄດ້ມີການຮ່ວມມື, ແລກປ່ຽນບົດຮຽນ ແລະ ປະສານງານກັນ ຢ່າງໃກ້ຊິດ ແລະ ຕໍ່ເນື່ອງ ກ່ຽວກັບ ການອຳນວຍຄວາມສະດວກດ້ານການຄ້າ, ການຜ່ານແດນ ແລະ ການຂົນສົ່ງສິນຄ້າຂ້າມແດນ.

97. ກອງປະຊຸມຮັບຊາບວ່າ ການຮ່ວມມືລະດັບທ້ອງຖິ່ນ ລະຫວ່າງດ່ານພາສີ (ສຸນລະກາກອນ) ຊາຍແດນຕິດຈອດກັນ ກ່ຽວກັບການແລກປ່ຽນຂໍ້ມູນຂ່າວສານ, ການສຳມະນາທາງວິຊາການ ແລະ ການແຂ່ງຂັນກິລາມິດຕະພາບ ໂດຍການຜັດປ່ຽນກັນເປັນເຈົ້າພາບ.

ການຮ່ວມມືດ້ານການເງິນ, ການທະນາຄານ ແລະ ຕະຫຼາດທຶນ.

98. ກອງປະຊຸມຮັບຊາບວ່າ ກະຊວງການຄັງໄທ ແຫ່ງ ຣາຊະອານາຈັກໄທ ໄດ້ກຳນົດນະໂຍບາຍ ແລະ ປັບປຸງຫຼັກການ ເພື່ອອຳນວຍຄວາມສະດວກໃຫ້ກິດຈະການທາງພາກລັດ ແລະ ພາກເອກະຊົນ ຂອງປະເທດ CLMV ທີ່ສາມາດລະດົມທຶນໃນຕະຫຼາດທຶນໄທໄດ້ ໂດຍຜ່ານການອອກ ແລະ ສະເໜີຂາຍພັນທະບັດລັດຖະບານ ແລະ ອອກຫຸ້ນກູ້ໃນຮູບສະກຸນເງິນບາດໃນໄທ (ຫຼື ບາດບອນ) ດັ່ງກ່າວມີສ່ວນສຳຄັນໃນການລົງທຶນຂອງພາກລັດ ແລະ ພາກທຸລະກິດລາວ.

99. ກອງປະຊຸມຮັບຊາບວ່າ ທະນາຄານແຫ່ງ ສປປ ລາວ ແລະ ທະນາຄານແຫ່ງປະເທດໄທ ໄດ້ຮ່ວມມື ແລະ ແລກປ່ຽນບົດຮຽນດ້ານວິຊາການ, ທຶນຝຶກອົບຮົມ ແລະ ທຶນການສຶກສາຢ່າງຕໍ່ເນື່ອງ ໂດຍໄດ້ມີການຈັດກອງປະຊຸມ 2 ປີຕໍ່ຄັ້ງ, ການແລກປ່ຽນກິດຈະກຳຕ່າງໆຮ່ວມກັນ, ເຊິ່ງຜັດປ່ຽນກັນເປັນເຈົ້າພາບ ເພື່ອແນໃສ່ສົ່ງເສີມການຮ່ວມມືລະຫວ່າງທະນາຄານທຸລະກິດລາວ ແລະ ໄທ ໃຫ້ມີການຮ່ວມມືກັນຫຼາຍຂຶ້ນ.

100. ກອງປະຊຸມສະແດງຄວາມຍິນດີ ຕໍ່ການຮ່ວມມື ລະຫວ່າງສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບແຫ່ງ ສປປ ລາວ ແລະ ຄະນະກຳກັບຫຼັກຊັບ ແລະ ຕະຫຼາດຫຼັກຊັບແຫ່ງ ປະເທດໄທ, ເຊິ່ງຢູ່ລະຫວ່າງການປຶກສາຫາລື ເຮັດບົດບັນທຶກຄວາມເຂົ້າໃຈ ວ່າດ້ວຍການຮ່ວມມື ແລະ ແລກປ່ຽນຂໍ້ມູນຂ່າວສານໃນການອອກຈຳໜ່າຍຮຸ້ນກູ້ຂ້າມປະເທດ ໃນປີ 2015.

101. ກອງປະຊຸມຮັບຊາບວ່າ ສຳນັກງານຄະນະກຳມະການກຳກັບຫຼັກຊັບ ແລະ ຕະຫຼາດຫຼັກຊັບ (Securities and Exchange Commission, Thailand) ແລະ ຕະຫຼາດຫຼັກຊັບ ແຫ່ງ ປະເທດໄທ ( Stock Exchange of Thailand) ຍັງໄດ້ຮ່ວມກັນດຳເນີນການດັ່ງນີ້:

1) ສົ່ງເສີມໃຫ້ພາກລັດ ແລະ ພາກທຸລະກິດຂອງປະເທດເພື່ອນບ້ານໃຊ້ຕະຫຼາດທຶນເພື່ອລະດົມທຶນສຳ ລັບການເຂົ້າສູ່ AEC.



ONA

2) ໃຫ້ການຮ່ວມມືຢ່າງຕໍ່ເນື່ອງ ໃນການຈັດຫຼັກສູດຝຶກອົບຮົມ ເພື່ອເສີມສ້າງ ແລະ ພັດທະນາຄວາມອາດສາມາດຂອງບຸກຄະລາກອນ (Capacity Building program ) ໃຫ້ແກ່ບຸກຄະລາກອນຂອງ ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ ແຫ່ງ ສປປ ລາວ (Lao Securities Commission Office – LSCO ) ແລະ ຕະຫຼາດຫຼັກຊັບລາວ (Lao Securities Exchange - LSX ) ຕະຫຼອດຈົນໜ່ວຍງານອື່ນໆ.

102. ກອງປະຊຸມເຫັນດີ ສະໜັບສະໜູນ ການຮ່ວມມືລະຫວ່າງຄະນະປັບປຸງທຸລະກິດ, ຫ້ອງວ່າການລັດຖະບານ ແຫ່ງ ສປປ ລາວ ກັບ ສໍານັກງານຄວາມຮ່ວມມື ເພື່ອການພັດທະນາລະຫວ່າງປະເທດ (ສພຣ) ແລະ ໜ່ວຍງານທີ່ກ່ຽວຂ້ອງຂອງໄທ, ພາຍໃຕ້ໂຄງການປັບປຸງລັດວິສາຫະກິດ ເພື່ອຫັນເປັນບໍລິສັດມະຫາຊົນ ແລະ ຈົດທະບຽນໃນຕະຫຼາດຫຼັກຊັບລາວ. ຝ່າຍໄທໄດ້ຂໍໃຫ້ຝ່າຍລາວຈັດລໍາດັບຄວາມສໍາຄັນຂອງກິດຈະກໍາການຮ່ວມມື ເພື່ອຈະໄດ້ໃຫ້ຄວາມຮ່ວມມືຢ່າງເໝາະສົມ.

103. ກອງປະຊຸມຮັບຊາບ ການຮ່ວມມືລະຫວ່າງຕະຫຼາດຫຼັກຊັບແຫ່ງ ປະເທດໄທ ແລະ ຄະນະປັບປຸງທຸລະກິດ ແຫ່ງ ສປປ ລາວ (National Committee for Business Development - NCBD) ໂດຍ ຕະຫຼາດຫຼັກຊັບແຫ່ງ ປະເທດໄທ ໃຫ້ການສະໜັບສະໜູນພັດທະນາບຸກຄະລາກອນ ລັດວິສາຫະກິດໃນ 3 ດ້ານດັ່ງລຸ່ມນີ້:

1) ການຈັດສໍາມະນາເພື່ອແລກປ່ຽນປະສົບການກ່ຽວກັບການແປຮູບ ແລະ ການເຂົ້າຈົດທະບຽນໃນຕະຫຼາດຫຼັກຊັບ ຂອງລັດວິສາຫະກິດໄທ.

2) ການຈັດຝຶກອົບຮົມໃນຫົວຂໍ້ Corporate Governance ໃຫ້ກັບຜູ້ບໍລິຫານ NCBD, ຜູ້ບໍລິຫານລະດັບສູງ ແລະ ພະນັກງານລັດວິສາຫະກິດ.

3) ການຈັດທັດສະນະສຶກສາ ທີ່ປະເທດໄທກ່ຽວກັບ ການປະສານງານກັບໜ່ວຍງານລັດທີ່ກ່ຽວຂ້ອງກັບການປະຕິຮູບວິສາຫະກິດ, ຂັ້ນຕອນການຈົດທະບຽນຂອງລັດວິສາຫະກິດ, ການຄຸ້ມຄອງລັດວິສາຫະກິດ ແລະ ການບໍລິຫານໜ່ວຍງານພາກລັດ.

<u>ການຮ່ວມມືດ້ານເສດຖະກິດໃນຂອບອະນຸພາກພື້ນ.</u>

104. ກອງປະຊຸມສະແດງຄວາມຍິນດີ ຕໍ່ຜົນການຈັດຕັ້ງປະຕິບັດງານຖະແຫຼງການວຽງຈັນ ຂອງກອງປະຊຸມສຸດຍອດ ACMECS ຄັ້ງທີ 5 ແລະ ແຜນປະຕິບັດງານ ACMECS 2013 - 2015 ມີຄວາມຄືບໜ້າຕາມລໍາດັບ ແລະ ທັງສອງຝ່າຍ ຈະສືບຕໍ່ຊຸກຍູ້ໃຫ້ບັນດາຂະແໜງການທີ່ກ່ຽວຂ້ອງຂອງທັງສອງປະເທດຈັດກອງປະຊຸມໜ່ວຍງານຕ່າງໆ ຂອງຂອບການຮ່ວມື ACMECS ແລະ ຊຸກຍູ້ການປະຕິບັດໂຄງການໃຫ້ເປັນຮູບປະທໍາ.

105. ກອງປະຊຸມເຫັນດີ ໃຫ້ຄະນະໜ່ວຍງານຮ່ວມສອງຝ່າຍ ທີ່ຮັບຜິດຊອບວຽກງານຂອງ ສປປ ລາວ ແລະ ຣາຊະອານາຈັກໄທ ທີ່ໄດ້ແຕ່ງຕັ້ງຂຶ້ນຕາມບົດບັນທຶກຄວາມເຂົ້າໃຈລະຫວ່າງ ລາວ ແລະ ໄທ ວ່າດ້ວຍການຮ່ວມມືໃນຂອບການສົ່ງເສີມການຜະລິດກະສິກໍາແບບມີສັນຍາ ທີ່ໄດ້ລົງນາມໃນວັນທີ 13 ມີນາ

2013 ສືບຕໍ່ຈັດກອງປະຊຸມໜ່ວຍງານຂອງຕົນຂຶ້ນ ເພື່ອຈັດຕັ້ງປະຕິບັດບົດບັນທຶກດັ່ງກ່າວໃຫ້ເປັນຮູບປະທຳ.

106. ກອງປະຊຸມສະແດງຄວາມຍິນດີ ຕໍ່ການນຳເນື້ອໃນສຳຄັນຂອງຖະແຫຼງການຮ່ວມ ກອງປະຊຸມສຸດຍອດອະນຸພາກພື້ນແມ່ນ້ຳຂອງ ຄັ້ງທີ 5 (Joint Summit Declaration : JSD ) ທີ່ຜູ້ນຳທັງ 6 ປະເທດອະນຸພາກພື້ນແມ່ນ້ຳຂອງໄດ້ໃຫ້ການຮັບຮອງຮ່ວມກັນແລ້ວ ໃນວັນທີ 20 ທັນວາ 2014 ທີ່ ບາງກອກ ເພື່ອຈັດຕັ້ງປະຕິບັດໃຫ້ເກີດເປັນຮູບປະທຳ ແລະ ມີຄວາມຄືບໜ້າຕາມລຳດັບ.

107. ກອງປະຊຸມຮັບຊາບວ່າ ໄທຈະເປັນເຈົ້າພາບຈັດກອງປະຊຸມລັດຖະມົນຕີຊ່ວຍວ່າການກະຊວງການຕ່າງປະ ເທດກ່ຽວກັບການພັດທະນາແລວເສດຖະກິດ ຕະເວັນອອກ-ຕະເວັນຕົກ ຄັ້ງທີ 3 ທີ່ ປະເທດໄທ ໃນປີ 2015.

<u>ຄະນະອະນຸກຳມະການສຶກສາ ແລະ ວິໄຈ ລາວ-ໄທ.</u>

108. ກອງປະຊຸມສະໜັບສະໜູນ ໃຫ້ນັກວິໄຈທັງສອງຝ່າຍສຶກສາວິໄຈຕາມການຕົກລົງຂອງ ກອງປະຊຸມຄະນະອະນຸກຳມະການສຶກສາ ແລະ ວິໄຈ ລາວ-ໄທ ຄັ້ງທີ 5 ໃນລະຫວ່າງວັນທີ 27 ກຸມພາ - 1 ມີນາ 2013 ທີ່ ແຂວງຫຼວງພະບາງ, ສປປ ລາວ ສືບຕໍ່ສຶກສາ ແລະ ວິໄຈ ຈຳນວນ 7 ຫົວຂໍ້ ຄື: 1) ຕ່ອງໂສ້ອຸປະທານ ແລະ ການບໍລິຫານຈັດການຂົນສົ່ງ (Logistics) ຂອງສິນຄ້າກະສິກຳຈາກລາວໄປໄທ ໃນກໍລະນີຂອງສາລີ ແລະ ກະລຳປີ, 2) ການພັດທະນາທຸລະກິດຂະໜາດນ້ອຍ ແລະ ຂະໜາດກາງ (SMEs) ຢູ່ຕາມສາຍທາງເລກ 9, 3) ເມືອງແຮກສ່ຽວສະຫວັນນະເຂດ-ມຸກດາຫານ, ຄຳມ່ວນ-ນະຄອນພະນົມ, ຈຳປາສັກ - ອຸບົນຣາຊະທານີ 4) ຜະລິດຕະພາບ (Productivity) ການຜະລິດເຂົ້າ, ມັນຕົ້ນ ແລະ ກາເຟ ໃນ ສປປ ລາວ, 5) ກົດໝາຍການຂົນສົ່ງສິນຄ້າຜ່ານແດນໄປປະເທດທີ່ສາມ, 6) ການລົງທຶນໂດຍກົງໃນ ສປປ ລາວ ແລະ 7) ການພັດທະນາຕະຫຼາດເງິນ ແລະ ຕະຫຼາດທຶນ ໃນ ສປປ ລາວ ໃຫ້ໄດ້ຮັບການຈັດຕັ້ງປະຕິບັດເປັນຮູບປະທຳໂດຍໄວ.

109. ກອງປະຊຸມເຫັນດີໃຫ້ ທີມງານສຶກສາ ແລະ ວິໄຈ ລາວ-ໄທ ທັງສອງຝ່າຍດຳເນີນການຈັດພິມປຶ້ມ ແລະ ເຜີຍແຜ່ຜົນການສຶກສາວິໄຈໃຫ້ສຳເລັດ ຈຳນວນ 6 ຫົວຂໍ້ ຄື: 1) ການຜະລິດກະລຳປີ ຕາມສັນຍາຜູກພັນສອງລົ້ນ ຢູ່ແຂວງຈຳປາສັກ, 2). ການຜະລິດສາລີ ຕາມສັນຍາຜູກພັນສອງລົ້ນ ຢູ່ແຂວງຈຳປາສັກ/ສາລະວັນ, 3.) ການຜະລິດສາລີ ຕາມສັນຍາຜູກພັນສອງລົ້ນ ຢູ່ແຂວງບໍ່ແກ້ວ, 4.) ການຜະລິດອ້ອຍຕາມສັນຍາຜູກພັນສອງລົ້ນ ຢູ່ແຂວງສະຫວັນນະເຂດ, 5.) ການຜະລິດອ້ອຍ ຕາມສັນຍາຜູກພັນສອງລົ້ນ ຢູ່ແຂວງຫຼວງນ້ຳທາ, ແລະ 6.) ເມືອງແຮກສ່ຽວລະຫວ່າງແຂວງຈຳປາສັກ ແລະ ແຂວງອຸບົນຣາດຊະທານີ.

<u>ການຮ່ວມມືເພື່ອການພັດທະນາ ລະຫວ່າງ ລາວ - ໄທ</u>

110. ກອງປະຊຸມສະແດງຄວາມຍິນດີ ຕໍ່ການຮ່ວມມືທາງດ້ານວິຊາການ, ເຊິ່ງເປັນກົນໄກທີ່ສຳຄັນຂອງການຮ່ວມມືເພື່ອການພັດທະນາ ລະຫວ່າງ ລາວ - ໄທ ແລະ ໄດ້ຈັດກອງປະຊຸມການຮ່ວມມືທາງດ້ານວິຊາ

ການ ລາວ-ໄທ ຄັ້ງທີ 19 ໃນລະຫວ່າງວັນທີ 23 - 25 ມິຖຸນາ 2013 ທີ່ ນະຄອນຣາຊະສີມາ, ຣາຊະອານາຈັກໄທ ແລະ ຄັ້ງທີ 20 ໃນລະຫວ່າງວັນທີ 28 - 29 ພຶດສະພາ 2014 ທີ່ ແຂວງອັດຕະປື ສປປ ລາວ ເພື່ອສະຫລຸບຜົນການຈັດຕັ້ງປະຕິບັດທີ່ຜ່ານມາ ແລະ ກຳນົດແຜນການຮ່ວມມື ທັງໃນຮູບແບບຂອງໂຄງການຮ່ວມມືເພື່ອການພັດທະນາ, ທຶນການສຶກສາ, ທຶນຝຶກອົບຮົມ ແລະ ທັດສະນະສຶກສາໃນປະເທດໄທ, ໂດຍໄດ້ມີການດຳເນີນທັງໃນຂອບການຮ່ວມມືທະວິພາຄີ ແລະ ພະຫຸພາຄີ ເພື່ອຕອບສະໜອງນະໂຍບາຍໃນການພັດທະນາເສດຖະກິດ ແລະ ສັງຄົມຂອງທັງສອງປະເທດ. ໃນນັ້ນມີໂຄງການຮ່ວມມືເພື່ອການພັດທະນາທີ່ກຳລັງດຳເນີນການຢູ່ ຈຳນວນ 26 ໂຄງການ ລວມມີໃນຂົງເຂດດ້ານການສຶກສາ ຈຳນວນ 14 ໂຄງການ, ດ້ານກະສິກຳ ຈຳນວນ 2 ໂຄງການ, ດ້ານສາທາລະນະສຸກ ຈຳນວນ 4 ໂຄງການ ດ້ານຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຈຳນວນ 4 ໂຄງການ ແລະ ດ້ານອື່ນໆ ຈຳນວນ 2 ໂຄງການ.

ການຮ່ວມມືດ້ານການພັດທະນາຊັບພະຍາກອນມະນຸດ

111. ກອງປະຊຸມຮັບຊາບວ່າ ທັງສອງຝ່າຍໄດ້ເຫັນດີຮ່ວມກັນ ເພື່ອກຳນົດແຜນຄວາມຕ້ອງການໃນການພັດທະນາຊັບພະຍາກອນມະນຸດ ໄລຍະເວລາ 3 ປີ (2015 - 2017) ແລະ ລັດຖະບານໄທໄດ້ໃຫ້ການຊ່ວຍເຫຼືອໃນການພັດທະນາຊັບພະຍາກອນມະນຸດ ໃນສົກປີ 2013 - 2014 ໂດຍມີທຶນການສຶກສາລະດັບປະລິນຍາເອກ ຈຳນວນ 5 ທຶນ; ລະດັບປະລິນຍາໂທ ຈຳນວນ 64 ທຶນ ລວມຈຳນວນທຶນທັງໝົດ 69 ທຶນ; ທຶນຝຶກອົບຮົມ/ທັດສະນະສຶກສາ ຈຳນວນ 173 ທຶນ ໃນຈຳນວນ 20 ຫຼັກສູດ ໃນດ້ານກະສິກຳ, ການສຶກສາ, ສາທາລະນະສຸກ ແລະ ດ້ານອື່ນໆ. ນອກຈາກນີ້, ຍັງໃຫ້ທຶນຝຶກອົບຮົມຫຼັກສູດນາໆຊາດ ຈຳນວນ 7 ທຶນ, ເຊິ່ງປະຈຸບັນມີນັກສຶກສາທີ່ກຳລັງສຶກສາຢູ່ປະເທດໄທ ຈຳນວນ 185 ຄົນ.

ການຮ່ວມມື ດ້ານການສຶກສາ

112. ກອງປະຊຸມຮັບຊາບ ຜົນຄວາມຄືບໜ້າຂອງການຈັດຕັ້ງປະຕິບັດແຜນງານການຮ່ວມມືດ້ານການສຶກສາ ລາວ - ໄທ ໄລຍະທີ 2 ໃນສົກປີ 2014-2016 ຈຳນວນ 14 ໂຄງການ ເຊັ່ນ: 1) ໂຄງການພັດທະນາໂຮງຮຽນເຕັກນິກວິຊາຊີບ, ແຂວງສະຫວັນນະເຂດ; 2) ໂຄງການພັດທະນາວິທະຍາໄລເຕັກນິກ ແຂວງວຽງຈັນ; 3)ໂຄງການພັດທະນາໂຮງຮຽນເຕັກນິກກະສິກຳດົງຄຳຊ້າງ; 4) ໂຄງການພັດທະນາໂຮງຮຽນເຕັກນິກວິຊາຊີບ, ແຂວງຫຼວງພະບາງ; 5) ໂຄງການຜະລິດສື່ການຮຽນ-ການສອນອີເລັກໂທນິກ ສຳລັບມັດທະຍົມຕອນປາຍ ໃນ ສປປ ລາວ; 6) ໂຄງການພັດທະນາຫຼັກສູດນາໆຊາດ ລະດັບປະລິນຍາໂທສາຂາການສຶກສາພັດທະນາຂອງ ມະຫາວິທະຍາໄລແຫ່ງຊາດລາວ; 7) ໂຄງການພັດທະນາຄວາມອາດສາມາດດ້ານກະສິກຳ ມະຫາວິທະ ຍາໄລຈຳປາສັກ; 8) ໂຄງການພັດທະນາຫຼັກສູດບໍລິຫານທຸລະກິດ ມະຫາວິທະຍາໄລຈຳປາສັກ; 9) ໂຄງ ການພັດທະນາວິທະຍາໄລພາລະສຶກສາ; 10) ໂຄງການພັດທະນາວິທະຍາໄລສິລະປະສຶກສາ; 11) ໂຄງການພັດທະນາໂຮງຮຽນມັດທະຍົມສົມບູນວຽງໄຊ, ເມືອງວຽງໄຊ, ແຂວງຫົວພັນ; 12) ໂຄງການພັດທະນາຊັບພະຍາກອນມະນຸດດ້ານກິລາ; 13) ໂຄງການພັດທະນາສະຖາບັນຜູ້ບໍລິຫານການສຶກສາ ແລະ 14) ໂຄງການເຕັກໂນໂລຢີຂ່າວສານ ແລະ ສື່ສານສຳລັບການສຶກສາ



ໆມ

ທາງໄກຜ່ານໂທລະພາບ ແລະ CD/ VCD/ DVD, ເຊິ່ງມອບໝາຍໃຫ້ພາກສ່ວນທີ່ກ່ຽວຂ້ອງຈັດຕັ້ງປະຕິບັດຕາມແຜນງານຂອງແຕ່ລະໂຄງການໃຫ້ສຳເລັດຕາມເປົ້າໝາຍ.

113. ກອງປະຊຸມສະແດງຄວາມຍິນດີ ທີ່ລັດຖະບານໄທ ໄດ້ມອບອຸປະກອນການຮຽນ - ການສອນ ແລະ ການປັບປຸງອາຄານຮຽນ, ອາຄານຝຶກງານ ພາຍໃຕ້ໂຄງການພັດທະນາໂຮງຮຽນເຕັກນິກ 4 ແຫ່ງ ຢູ່ ສປປ ລາວມູນຄ່າ 63 ລ້ານບາດ; ອຸປະກອນການຮຽນ - ການສອນ ດ້ານສິລະປະດົນຕີ ແລະ ດ້ານສິລະປະກຳພາຍໃຕ້ໂຄງການພັດທະນາວິທະຍາໄລສິລະປະສຶກສາ ສປປ ລາວ ມູນຄ່າ 2.12 ລ້ານບາດ; ການກໍ່ສ້າງອາຄານໂຮງຮຽນມັດທະຍົມສົມບູນວຽງໄຊ, ເມືອງວຽງໄຊ, ແຂວງຫົວພັນ ມູນຄ່າ 26.16 ລ້ານບາດ; ຫ້ອງຜະລິດສື່ການຮຽນ - ການສອນ, ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ ພາຍໃຕ້ໂຄງການພັດທະນາສື່ອີເລັກໂຕນິກເພື່ອການຮຽນ - ການສອນ ລະດັບມັດທະຍົມສຶກສາຕອນປາຍ ໃນ ສປປ ລາວ ມູນຄ່າ 8.5 ລ້ານບາດ.

114. ກອງປະຊຸມສະແດງຄວາມຍິນດີ ຕໍ່ຜົນສຳເລັດຂອງການກໍ່ສ້າງອາຄານໂຮງຮຽນບ້ານຍາງຄຳ, ເມືອງເຊບັ້ງໄຟ, ແຂວງຄຳມ່ວນ ພາຍໃຕ້ໂຄງການໂຮງຮຽນເພື່ອນມິດ ລາວ - ໄທ ເຊິ່ງເປັນງົບປະມານຂອງກະຊວງການຕ່າງປະເທດໄທ ແລະ ການກໍ່ສ້າງອາຄານຮຽນຊຸມຊົນໃນ ສປປ ລາວ ສຳເລັດແລ້ວ ຈຳນວນ 4 ແຫ່ງ ແລະ ກຳລັງ ດຳເນີນການກໍ່ສ້າງ ຈຳນວນ 3 ແຫ່ງ ລວມທັງໝົດ ຈຳນວນ 7 ແຫ່ງ, ດ້ວຍງົບປະມານຂອງສຳນັກງານສົ່ງ ເສີມການສຶກສານອກລະບົບ, ກະຊວງສຶກສາທິການໄທ.

115. ກອງປະຊຸມຮັບຊາບ ການຢ້ຽມຢາມຣາຊະອານາຈັກໄທຂອງ ທ່ານ ລີຕູ້ ບົວປ່າວ, ລັດຖະມົນຕີຊ່ວຍວ່າການກະຊວງສຶກສາທິການ ແລະ ກິລາ ແຫ່ງ ສປປ ລາວ ພ້ອມຄະນະ, ໃນລະຫວ່າງວັນທີ 28 ກັນຍາ - 2 ຕຸລາ 2014 ເຊິ່ງຝ່າຍໄທເຫັນດີໃຫ້ການຮ່ວມມືໃນການຝຶກອົບຮົມດ້ານໄອຊີທີ ໃຫ້ແກ່ກະຊວງສຶກສາທິການ ແລະ ກິລາ ແຫ່ງ ສປປ ລາວ.

<u>ການຮ່ວມມືດ້ານກະສິກຳ</u>

116. ກອງປະຊຸມຮັບຊາບ ຜົນຄວາມຄືບໜ້າການຈັດຕັ້ງປະຕິບັດຕາມແຜນງານການຮ່ວມມື ດ້ານກະສິກຳພາຍໃຕ້ຂອບການຮ່ວມມືທາງດ້ານວິຊາການ ຈຳນວນ 2 ໂຄງການ ເຊັ່ນ: ໂຄງການພັດທະນາຫ້ອງວິໄຈພະຍາດປາ ແລະ ໂຄງການພັດທະນາຫ້ອງທົດລອງວິເຄາະຄຸນນະພາບອາຫານສັດ ແລະ ຝ່າຍໄທໄດ້ສະໜັບສະໜູນທຶນຝຶກອົບຮົມ ແລະ ທຶນການສຶກສາລະດັບປະລິນຍາໂທ ຈຳນວນ 2 ທຶນ ແກ່ວິຊາການຝ່າຍລາວ, ພ້ອມຈະຈັດສົ່ງອຸປະກອນ ແລະ ເຄື່ອງມືຫ້ອງທົດລອງໃຫ້ຝ່າຍລາວພາຍຫຼັງທີ່ຝ່າຍລາວໄດ້ປັບປຸງຫ້ອງທົດລອງສຳເລັດແລ້ວ.

117. ກອງປະຊຸມຮັບຊາບ ຜົນການດຳເນີນງານຂອງຄະນະເຮັດວຽກຮ່ວມມືດ້ານກະສິກຳ ລາວ - ໄທ ພາຍໃຕ້ຂອບການຮ່ວມມືດ້ານກະສິກຳ (Agricultural Cooperation Framework-ACF) ແລະ ສະໜັບສະໜູນໃຫ້ມີການຮ່ວມມືດ້ານກະສິກຳ ລະຫວ່າງ ກະຊວງກະສິກຳ ແລະ ປ່າໄມ້ ແຫ່ງ ສປປ ລາວ ແລະ ກະຊວງກະເສດ ແລະ ສະຫະກອນ ແຫ່ງ ຣາຊະອານາຈັກໄທ ພາຍໃຕ້ບົດບັນທຶກການຮ່ວມມືດ້ານກະສິກຳຂອງ ສອງກະຊວງ ທີ່ໄດ້ລົງນາມໃນວັນທີ 19 ພຶດສະພາ 2013, ທີ່ ຈັງຫວັດຊຽງໃໝ່; ເຊິ່ງຈະໄດ້ມີການປະຊຸມຄະນະເຮັດວຽກຮ່ວມພາຍໃຕ້ຂອບການຮ່ວມມືດັ່ງກ່າວຕໍ່ໄປ.

ການຮ່ວມມືດ້ານສາທາລະນະສຸກ

118. ກອງປະຊຸມຮັບຊາບ ຜົນຄວາມຄືບໜ້າຂອງການຈັດຕັ້ງປະຕິບັດຕາມແຜນງານການຮ່ວມມືດ້ານສາທາລະນະສຸກ ຈຳນວນ 4 ໂຄງການ ເຊັ່ນ: 1) ໂຄງການພັດທະນາໂຮງໝໍໂພນໂຮງ, ແຂວງວຽງຈັນ ໄດ້ມີການລົງນາມບົດບັນທຶກຄວາມເຂົ້າໃຈ ໃນວັນທີ 15 ສິງຫາ 2013 ແລະ ເລີ່ມລົງມືກໍ່ສ້າງໃນເດືອນ ກໍລະກົດ 2014; 2) ໂຄງການພັດທະນາໂຮງໝໍແຂວງບໍ່ແກ້ວ ໄລຍະ 2 ໄດ້ມີການລົງນາມບົດບັນທຶກຄວາມເຂົ້າໃຈ ໃນວັນທີ 26 ພະຈິກ 2014 ໂດຍຊຸກຍູ້ໃຫ້ມີການຄັດເລືອກບໍລິສັດຜູ້ຮັບເໝົາກໍ່ສ້າງ; 3) ໂຄງການພັດທະນາໂຮງໝໍເມືອງປາກຊ່ອງ, ແຂວງຈຳປາສັກ, ໄດ້ມີການປຶກສາຫາລືລາຍລະອຽດ ແບບກໍ່ສ້າງອາຄານ ແລະ ລົງນາມ MOU ຮ່ວມກັນໃນວັນທີ 24 ມັງກອນ 2015 ພ້ອມທັງຄັດເລືອກບໍລິສັດຮັບເໝົາກໍ່ສ້າງ ແລະ 4) ໂຄງການສົ່ງເສີມໂພຊະນາການຊຸມຊົນ ເຊິ່ງຝ່າຍລາວຈະສົ່ງລາຍລະອຽດບົດສະເໜີໂຄງການໃຫ້ຝ່າຍໄທໂດຍໄວ.

119. ກອງປະຊຸມຮັບຊາບ ຄວາມຄືບໜ້າໃນການດຳເນີນງານການຮ່ວມມືສະກັດກັ້ນ ແລະ ຄວບຄຸມພະຍາດຕິດຕໍ່ລຽບຕາມຊາຍແດນ ລະຫວ່າງ ກະຊວງສາທາລະນະສຸກລາວ ແລະ ໄທ ທັງໃນລະດັບສູນກາງ ແລະ ທ້ອງຖິ່ນ ຢ່າງຕໍ່ເນື່ອງ; ເຊິ່ງມີການດຳເນີນການຮ່ວມກັນ ລະຫວ່າງ ນະຄອນຫຼວງວຽງຈັນ ແລະ ຈັງຫວັດໜອງຄາຍ, ແຂວງຈຳປາສັກ ແລະ ຈັງຫວັດອຸບົນຣາຊະທານີ, ແຂວງສະຫວັນນະເຂດ ແລະ ຈັງຫວັດມຸກດາຫານ, ແຂວງບໍ່ແກ້ວ ແລະ ຈັງຫວັດຊຽງຣາຍ.

ການຮ່ວມມືດ້ານຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ

120. ກອງປະຊຸມຮັບຊາບ ຄວາມຄືບໜ້າຂອງໂຄງການພັດທະນາຊັບພະຍາກອນທໍລະນີແບບຍືນຍົງ ເຊິ່ງຈະໄດ້ມີກອງປະຊຸມຄະນະກຳມະການບໍລິຫານໂຄງການ (Project Management Committee: PMC) ຄັ້ງທີ 4 ໃນລະຫວ່າງວັນທີ 26 - 28 ມັງກອນ 2015 ທີ່ ນະຄອນຫຼວງວຽງຈັນ ເພື່ອສະຫຼຸບຜົນການຈັດຕັ້ງປະຕິ ບັດ ແລະ ພິຈາລະນາແຜນງານໂຄງການສຳລັບປີ 2015.

121. ກອງປະຊຸມຮັບຊາບ ຄວາມຄືບໜ້າແຜນການສ້າງຄວາມເຂັ້ມແຂງດ້ານການຄຸ້ມຄອງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຈຳນວນ 4 ໂຄງການຍ່ອຍຄື: 1) ໂຄງການປັບປຸງລະບົບພື້ນຖານການສື່ສານຂໍ້ມູນຂ່າວສານດ້ານອຸຕຸນິຍົມວິທະຍາ (Web - Based) ແລະ ປັບປຸງພື້ນຖານໂຄງຮ່າງ IT; 2) ໂຄງການສ້າງແຜນຈັດສັນປ່າປ້ອງກັນຄຸ້ມຄອງປ່າໄມ້ບ້ານ ແລະ ຄຸ້ມຄອງແຫຼ່ງແກ່ນພັນໄມ້ ໂດຍການມີສ່ວນຮ່ວມຂອງປະຊາຊົນ; 3) ໂຄງການພັດທະນາຊັບພະຍາກອນມະນຸດດ້ານສົ່ງເສີມຄຸນນະພາບສິ່ງແວດລ້ອມແບບມີຍຸດທະສາດ 4) ໂຄງການສ້າງຄວາມອາດສາມາດ ແກ່ພະນັກງານກົມຄວບຄຸມມົນລະພິດ ສປປ ລາວ.

122. ກອງປະຊຸມສະໜັບສະໜູນ ໃຫ້ພາກສ່ວນທີ່ກ່ຽວຂ້ອງທັງສອງຝ່າຍ ດຳເນີນການສ້າງສວນພຶກສາຊາດ (Arboretum) ໂດຍທັງສອງຝ່າຍຈະປຶກສາຫາລືຮ່ວມກັນ ກ່ຽວກັບແຜນງານລະອຽດຂອງໂຄງການຕໍ່ໄປ ໂດຍຝ່າຍລາວກຳລັງຢູ່ໃນລະຫວ່າງການພິຈາລະນາສະຖານທີ່ສ້າງສວນພຶກສາຊາດ ແລະ ຈະແຈ້ງໃຫ້ຝ່າຍໄທຊາບພາຍໃນ ເດືອນເມສາ 2015 ເພື່ອໃຫ້ທັນການເບີກຈ່າຍງົບປະມານປີ 2015 ຂອງຝ່າຍໄທ.

123. ກອງປະຊຸມສະໜັບສະໜູນ ໃຫ້ທັງສອງຝ່າຍປຶກສາຫາລືຮ່ວມກັນກ່ຽວກັບການສ້າງບົດບັນທຶກຄວາມເຂົ້າໃຈ ດ້ານຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ລາວ - ໄທ ເພື່ອສົ່ງເສີມການຮ່ວມມືດ້ານຊັບພະ ຍາກອນ ແລະ ສິ່ງແວດລ້ອມ ໃນຂະແໜງຕ່າງໆທີ່ຈະເປັນປະໂຫຍດຮ່ວມກັນ.

ການຮ່ວມມືດ້ານວິທະຍາສາດ ແລະ ເຕັກໂນໂລຊີ

124. ກອງປະຊຸມຮັບຊາບວ່າ ກະຊວງວິທະຍາສາດ ແລະ ເຕັກໂນໂລຊີ ລາວ ແລະ ໄທ ໄດ້ມີການລົງນາມບົດບັນທຶກຄວາມເຂົ້າໃຈ ວ່າດ້ວຍການຮ່ວມມືທາງດ້ານວິທະຍາສາດ, ເຕັກໂນໂລຊີ ແລະ ນະວັດຕະກໍາ ໃນວັນທີ 26 ພະຈິກ 2014 ແລະ ຜົນຂອງກອງປະຊຸມ ລະດັບລັດຖະມົນຕີກະຊວງວິທະຍາສາດ ແລະ ເຕັກໂນໂລຊີ ລາວ - ໄທ ຄັ້ງທີ 6 ໃນລະຫວ່າງວັນທີ 27 - 28 ພະຈິກ 2014 ທີ່ ນະຄອນຫຼວງວຽງຈັນ, ເຊິ່ງໄດ້ກໍານົດແຜນການຮ່ວມມືໃນ ຈໍານວນ 14 ຂົງເຂດ.

125. ກອງປະຊຸມຮັບຊາບ ຜົນການຢ້ຽມຢາມຣາຊະອານາຈັກໄທ ຂອງ ລັດຖະມົນຕີວ່າການກະຊວງວິທະຍາສາດ ແລະ ເຕັກໂນໂລຊີ ແຫ່ງ ສປປ ລາວ, ໃນວັນທີ 14 - 18 ມັງກອນ 2015 ແລະ ກອງປະຊຸມວ່າການຮ່ວມມືດ້ານວິທະຍາສາດ, ເຕັກໂນໂລຊີ ແລະ ນະວັດຕະກໍາ ລາວ - ໄທ ຄັ້ງວັນທີ 16 ມັງກອນ 2015, ເຊິ່ງໄດ້ກໍານົດ ເພີ່ມອີກຈໍານວນ 5 ຂົງເຂດ ລວມເປັນ 19 ຂົງເຂດ ແລະ ເຫັນດີໃຫ້ມີການຈັດຕັ້ງຄະນະກໍາມະການຮ່ວມ (Joint Committee) ແລະ ຄະນະເຮັດວຽກຮ່ວມ (Joint Working Group) ໃນແຕ່ລະຂົງເຂດການຮ່ວມມືເພື່ອເປັນກົນໄກໃນການຕິດຕາມ ແລະ ຊຸກຍູ້ການຈັດຕັ້ງປະຕິບັດ ພາຍໃຕ້ບົດບັນທຶກຄວາມເຂົ້າໃຈ.

126. ກອງປະຊຸມຮັບຊາບ ຄວາມຄືບໜ້າໃນການຈັດຕັ້ງປະຕິບັດການຮ່ວມມືດ້ານການບໍລິຫານຄຸ້ມຄອງຊັບພະຍາກອນນໍ້າ ເພື່ອແລກປ່ຽນຂໍ້ມູນທາງດ້ານປະລິມານນໍ້າ ແລະ ສະພາບອາກາດໃນບັນດາແມ່ນໍ້າທີ່ສໍາຄັນໃນ ສປປ ລາວ ພ້ອມທັງຕິດຕາມ ແລະ ການພະຍາກອນ (ຄາດການ) ເພື່ອກຽມຄວາມພ້ອມໃນການຮັບມືການປ່ຽນແປງຂອງສະພາບດິນຟ້າອາກາດ ໂດຍໄດ້ສໍາເລັດການຕິດຕັ້ງສະຖານີວັດແທກປະລິມານນໍ້າຝົນ ແລະ ວັດແທກລະດັບນໍ້າແບບອັດຕະໂນມັດ ຢູ່ບໍລິເວນ 5 ຈຸດ ຄື: ຂົວສີທອງ (ນະຄອນຫຼວງວຽງຈັນ), ເມືອງຕົ້ນເຜິ້ງ (ແຂວງບໍ່ແກ້ວ), ຂົວນໍ້າອູ (ແຂວງຫຼວງພະບາງ), ຂົວປາກກະດິງ (ແຂວງບໍລິຄໍາໄຊ), ຂົວເຊບັ້ງໄຟ (ແຂວງຄໍາມ່ວນ).

ການຮ່ວມມືດ້ານສັງຄົມ, ການແລກປ່ຽນວັດທະນະທໍາ ແລະ ການທ່ອງທ່ຽວ

127. ກອງປະຊຸມສະໜັບສະໜູນການດໍາເນີນກິດຈະກໍາດ້ານວັດທະນະທໍາ ລະຫວ່າງ ສອງປະເທດ ເພື່ອສົ່ງເສີມຄວາມເຂົ້າໃຈ ແລະ ການໄປມາຫາສູ່ລະຫວ່າງປະຊາຊົນ ພາຍໃຕ້ແນວຄິດ "ທົດສະວັດແຫ່ງການພົວພັນລາວ - ໄທ" ເຊິ່ງແມ່ນຜົນຂອງການຢ້ຽມຢາມ ສປປ ລາວ ຂອງ ທ່ານ ນາຍົກລັດຖະມົນຕີ ແຫ່ງ ຣາຊະອານາ ຈັກໄທ ໃນວັນທີ 26 - 27 ພະຈິກ 2014.

128. ກອງປະຊຸມສະໜັບສະໜູນ ໃຫ້ມີການສ້າງບົດບັນທຶກຄວາມເຂົ້າໃຈວ່າດ້ວຍການແລກປ່ຽນວິທະຍາການທາງບູຮານຄະດີ, ບູຮານສະຖານ, ວັດທະນະທໍາ ແລະ ພິພິທະພັນສະຖານ ລະຫວ່າງ ກະຊວງຖະແຫຼງຂ່າວ, ວັດທະນະທໍາ ແລະ ທ່ອງທ່ຽວ ແຫ່ງ ສປປ ລາວ ແລະ ກະຊວງວັດທະນະທໍາ ແຫ່ງ ຣາຊະອານາຈັກໄທ.

129. ກອງປະຊຸມຮັບຊາບ ຜົນການຂະຫຍາຍຕົວດ້ານການທ່ອງທ່ຽວ ຂອງທັງສອງປະເທດ, ເຊິ່ງຕາມສະຖິຕິຂອງຝ່າຍລາວ ໃນປີ 2013 ມີນັກທ່ອງທ່ຽວຈາກໄທ ເດີນທາງມາທ່ອງທ່ຽວໃນປະເທດລາວ ຈໍານວນ

2,059,434 ຄົນ, ເພີ່ມຂຶ້ນ 121,822 ຄົນ ທຽບໃສ່ປີ 2012 ແລະ ປີ 2014 (9 ເດືອນ) ມີຈຳນວນ 1,478,439 ຄົນ.

130. ກອງປະຊຸມສະໜັບສະໜູນ ໃຫ້ໜ່ວຍງານທີ່ກ່ຽວຂ້ອງທັງສອງຝ່າຍປຶກສາຫາລືກ່ຽວກັບ ການຮ່ວມມືດ້ານການທ່ອງທ່ຽວ ໃນລັກສະນະ Joint Package, ການພັດທະນາແຫຼ່ງທ່ອງທ່ຽວບໍລິເວນພື້ນທີ່ຊາຍແດນ ລວມທັງການທ່ອງທ່ຽວທຳມະຊາດ, ວັດທະນະທຳ ແລະ ກຳນົດມາດຕະການສ້າງຄວາມປອດໄພໃຫ້ແກ່ນັກທ່ອງທ່ຽວ.

<u>ການຮ່ວມມືດ້ານອື່ນໆ</u>

131. ກອງປະຊຸມຮັບຊາບ ຄວາມຄືບໜ້າ ໃນການຈັດຕັ້ງປະຕິບັດ ໂຄງການພັດທະນາລະບົບ ICT ເພື່ອພັດທະນາລະບົບຖານຂໍ້ມູນດ້ານອຸດສາຫະກຳ, ການຄ້າ ແລະ ວິສາຫະກິດຂະໜາດນ້ອຍ ແລະ ກາງ ໃນ 5 ແຂວງ ຄື: ນະຄອນຫຼວງວຽງຈັນ, ແຂວງຫຼວງພະບາງ, ແຂວງຈຳປາສັກ, ແຂວງຫຼວງນ້ຳທາ ແລະ ແຂວງສະຫວັນນະເຂດ; ເຊິ່ງໄດ້ມີການສະໜອງອຸປະກອນ ແລະ ຕິດຕັ້ງລະບົບດັ່ງກ່າວ ເພື່ອທົດລອງນຳໃຊ້ເຂົ້າໃນການເກັບກຳຂໍ້ມູນ ລວມທັງການພັດທະນາບຸກຄະລາກອນໃຫ້ມີຄວາມສາມາດໃນການນຳໃຊ້ອຸປະກອນດັ່ງກ່າວໄດ້ຢ່າງມີປະສິດທິພາບ ແລະ ການສະໜັບສະໜູນການພັດທະນາບຸກຄະລາກອນພາຍໃຕ້ໂຄງການກະກຽມຈັດຕັ້ງສານປົກຄອງ ແຫ່ງ ສປປ ລາວ.

<u>ສະມາຄົມ ລາວ-ໄທ; ໄທ-ລາວ ເພື່ອມິດຕະພາບ</u>

132. ກອງປະຊຸມສະແດງຄວາມຍິນດີຕໍ່ ຜົນການດຳເນີນກິດຈະກຳຮ່ວມກັນ ລະຫວ່າງ ສະມາຄົມລາວ-ໄທ; ໄທ-ລາວ ເພື່ອມິດຕະພາບ, ເຊິ່ງເປັນກົນໄກເສີມສ້າງຄວາມເຂົ້າໃຈອັນດີລະຫວ່າງປະຊາຊົນ ລາວ ແລະ ໄທ. ໃນໄລຍະຜ່ານມາ ໄດ້ຈັດກອງປະຊຸມຮ່ວມລະຫວ່າງສອງສະມາຄົມ ໃນວັນທີ 13 ກັນຍາ 2014 ທີ່ແຂວງບໍ່ແກ້ວ ສປປ ລາວ ເພື່ອທົບທວນຄືນ ແລະ ກຳນົດແຜນການຮ່ວມມືໃນການສົ່ງເສີມການພົວພັນມິດຕະພາບ ລະຫວ່າງ ລາວ ແລະ ໄທ, ການແລກປ່ຽນສິລະປະວັດທະນະທຳ, ການທ່ອງທ່ຽວ ແລະ ເສດຖະກິດ, ການສຳມະນາດ້ານວິຊາການ ແລະ ກິດຈະກຳລະຫວ່າງປະຊາຊົນສອງປະເທດ.

133. ກອງປະຊຸມສະແດງຄວາມຍິນດີ ທີ່ກະຊວງການຕ່າງປະເທດ ແຫ່ງ ຣາຊະອານາຈັກໄທ ແລະ ສາມາຄົມໄທ-ລາວ ເພື່ອມິດຕະພາບ ຮ່ວມກັບ ສະມາຄົມ ລາວ-ໄທ ເພື່ອມິດຕະພາບ ໄດ້ນຳຜ້າກະຖິນພະຣາຊະທານ ຈາກ ເຈົ້າຊີວິດແຫ່ງ ຣາຊະອານາຈັກໄທ ໄປທອດຖວາຍ ທີ່ ວັດສີສຸກມັງຄະຣາຣາມ, ເມືອງວັງວຽງ ແຂວງວຽງຈັນ ໃນລະຫວ່າງວັນທີ 25 ຕຸລາ 2014.

134. ກອງປະຊຸມສະໜັບສະໜູນ ໃຫ້ພາກສ່ວນທີ່ກ່ຽວຂ້ອງທັງສອງຝ່າຍ ປຶກສາຫາລືຮ່ວມກັນກ່ຽວກັບແຜນການຈັດກິດຈະກຳເພື່ອສະເຫຼີມສະຫຼອງ ການສ້າງຕັ້ງສາຍພົວພັນການທູດລາວ - ໄທ ຄົບຮອບ 65 ປີ.

ກຳນົດວັນເວລາ ແລະ ສະຖານທີ່ຈັດກອງປະຊຸມຄະນະກຳມະທິການຮ່ວມ ວ່າດ້ວຍການຮ່ວມມື ລາວ-ໄທ ຄັ້ງທີ 20.

ຝ່າຍໄທຮັບເປັນເຈົ້າພາບຈັດກອງປະຊຸມ ຄະນະກຳມາທິການຮ່ວມ ວ່າດ້ວຍການຮ່ວມມື ລາວ-ໄທ ຄັ້ງທີ 20 ທີ່ ຣາຊະອານາຈັກໄທ, ສຳລັບກຳນົດວັນເວລາ ແລະ ສະຖານທີ່ຈັດກອງປະຊຸມ ຈະໄດ້ປະສານງານຜ່ານຊ່ອງທາງການທູດ ຕໍ່ໄປ.

ທັງສອງຝ່າຍ ໄດ້ແລກປ່ຽນຄວາມຄິດເຫັນເຊິ່ງກັນແລະກັນ ຢ່າງກົງໄປກົງມາ ດ້ວຍຄວາມເຂົ້າອົກເຂົ້າໃຈອັນດີ ພາຍໃຕ້ບັນຍາກາດແຫ່ງໄມຕີຈິດ ມິດຕະພາບ ຖານບ້ານໃກ້ເຮືອນຄຽງທີ່ດີຕໍ່ກັນ.

ຄະນະຜູ້ແທນ ຣາຊະອານາຈັກໄທ ສະແດງຄວາມຂອບໃຈເປັນຢ່າງສູງ ແລະ ຢ່າງຈິງໃຈມາຍັງຄະນະຜູ້ແທນ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ທີ່ໄດ້ໃຫ້ການຕ້ອນຮັບຢ່າງອົບອຸ່ນ ແລະ ອຳນວຍຄວາມສະດວກເປັນຢ່າງດີໃນການຈັດກອງປະຊຸມຄັ້ງນີ້ ປະສົບຜົນສຳເລັດ ດ້ວຍຄວາມເປັນລະບຽບຮຽບຮ້ອຍທຸກປະການ.

ນະຄອນຫຼວງວຽງຈັນ, ວັນທີ 24 ມັງກອນ 2015

---